ສະບັບທີ 01, ຊຸດທີ 01 (2026); 1- 11

ວາລະສານວິທະຍາສາດການເມືອງ-ການປົກຄອງ
www.jnappa.lci.la; ISSN: 3107-1163; E-ISSN: 3107-1171
DOI:https://doi.org/10.71026/jnappa.2026.010101



# ພັດທະນາຄົນເພື່ອຕອບສະໜອງກັບການພັດທະນາປະເທດຊາດ ຕາມທິດສັງຄົມນິຍົມ ຢູ່ ສປປ ລາວ

# Human resource development to respond to the national development In the socialist direction in Lao PDR

**ຄຳມອນ ຈັນທະຈິດ, ຄະນະໂຄສະນາອົບຮົມສູນກາງພັກ**

**E-mail: Chanthachith1979@gmail.com**

**ປະຫວັດຫົວຂໍ້ຄົ້ນຄວ້າ**

ໄດ້ຮັບ: 30 ພຶດສະພາ 2025
ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ 2025
ຖືກຮັບຮອງ: 15 ຕຸລາ 2025
ຈັດພິມອອນລາຍ: 03 ມີນາ 2026

**ບົດຄັດຫຍໍ້:**

ການພັດທະນາຄົນເປັນປັດໄຈສຳຄັນ, ຈຳເປັນ ແລະ ຂາດບໍ່ໄດ້ໃນແຕ່ລະໄລຍະປະຫວັດສາດ; ການພັດທະນາຄົນ ແມ່ນການສ້າງໃຫ້ຄົນມີຄວາມຮູ້, ວິຊາການ, ມີສຸຂະພາບແຂງແຮງ ແລະ ມີຄວາມສີວິໄລດ້ານຈິດໃຈ ແນໃສ່ຮັບໃຊ້ພາລະກິດສ້າງສັງຄົມນິຍົມ. ຜ່ານມາການພັດທະນາຄົນ ເພື່ອຕອບສະໜອງການພັດທະນາປະເທດຊາດຕາມທິດສັງຄົມນິຍົມ ຢູ່ ສປປ ລາວ ໄດ້ມີຜົນສຳເລັດ ໂດຍສະເພາະດ້ານແນວຄິດຕໍ່ອຸດົມການສັງຄົມນິຍົມ, ດ້ານການສຶກສາ, ສະຕິປັນ ຍາ, ຄວາມສາມາດ, ຄວາມຊຳນານງານ, ດ້ານເຕັກນິກ, ວິຊາການ... ພ້ອມດຽວກັນນີ້ ຍັງປະສົບກັບບັນຫາຫຼາຍຢ່າງ ເປັນຕົ້ນການພັດທະ ນາຄົນ ໃຫ້ເຂົ້າເຈົ້າເຂົ້າໃຈອຸດົມການສັງຄົມນິຍົມ, ເສັ້ນທາງກ້າວຂຶ້ນສັງຄົມນິຍົມ, ທິດສະດີສັງຄົມນິຍົມ, ວັດທະນະທຳສັງຄົມນິຍົມ ຍັງບໍ່ທັນທົ່ວເຖິງທຸກເປົ້າໝາຍ, ການພັດທະນາພະນັກງານ-ລັດຖະ ກອນ ປະສິດທິພາບຍັງບໍ່ສູງ, ທັກສະວິຊາຊີບໃຫ້ພົນລະເມືອງ ຍັງ ຈຳກັດ, ການປັບຕົວເຂົ້າກັບສະພາບວິທະຍາສາດ ເຕັກໂນໂລຊີກ້າວໜ້າ ແລະ ການນຳໃຊ້ເຂົ້າມາຮັບໃຊ້ການພັດທະນາປະເທດຊາດ ຍັງເຮັດໄດ້ໜ້ອຍ; ການສົ່ງເສີມສຸຂະພາບ, ພະລານາໄມໃຫ້ທົ່ວປວງຊົນ ເພື່ອໃຫ້ມີສຸຂະພາບແຂງແຮງທາງດ້ານຮ່າງກາຍ ແລະ ດ້ານຈິດໃຈ ຍັງບໍ່ທັນບັນລຸຕາມຄາດໝາຍວາງໄວ້ ແລະ ບັນຫາອື່ນໆ. ດ້ວຍເຫດນັ້ນ, ການພັດທະນາຄົນໃນຕໍ່ໜ້າຈຶ່ງຕ້ອງໄດ້ເອົາໃຈໃສ່ໃນການສ້າງໃຫ້ຄົນມີປັນຍາຄວາມຮູ້, ມີຄວາມເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມ; ເອົາໃຈໃສ່ຍົກລະດັບດ້ານການສຶກສາ, ເຕັກນິກວິຊາການ ແລະ ຮັບປະກັນໃຫ້ມີສຸຂະພາບແຂງແຮງ, ມີຄວາມສີວິໄລດ້ານຈິດໃຈ.

**ຄຳສັບສຳຄັນ:** ການພັດທະນາຄົນ, ສັງຄົມນິຍົມ, ສປປ ລາວ.

**Abstract**

Human resource development is an important, necessary and indispensable factor in each historical period; Human development is the creation of people with knowledge, skills, health and mental civilization to serve the cause of building socialism. In the past, human development to meet the national development in the socialist direction in the Lao PDR has been successful, especially in terms of ideology, education, wisdom, ability, skills, technology, and academics... At the same time, it still faces many problems, such as developing people to understand socialist ideology, the path to socialism, socialist theory, and socialist culture has not yet reached all goals, the development of civil servants is not yet high in efficiency, professional skills for citizens are still limited, adaptation to advanced science and technology and their use in serving national development have not been done well; health promotion and sanitation for the entire population to be physically and mentally healthy have not yet achieved the expected results, and other problems. Therefore, future human development must focus on creating people with wisdom, knowledge, and confidence in socialist ideals; pay attention to upgrading education, technical skills, and ensuring strong health and mental civilization.

**Key words**: Human development, socialist, Lao PDR

---

**I. ທັດສະນະໃນການພັດທະນາຄົນ ເພື່ອຕອບສະໜອງກັບການພັດທະນາປະເທດຊາດ ຕາມທິດສັງຄົມນິຍົມ.**

ພັດທະນາຄົນ ໝາຍເຖິງສ້າງຄົນໃຫ້ມີຄວາມຮັບຜິດຊອບຢ່າງ ຮອບດ້ານໃນການປະຕິບັດອຸດົມການຂອງພັກ, ຢຶດໝັ້ນຕໍ່ອຸດົມການສັງຄົມນິຍົມ; ຢຶດໝັ້ນຕໍ່ລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິ ຫານ, ມູນເຊື້ອອັນດີງາມຂອງພັກ, ຂອງຊາດ; ແມ່ນບຸກຄົນທີ່ ເຊື່ອມຊຶມ ແລະ ກຳແໜ້ນເສັ້ນທາງສັງຄົມນິຍົມ, ລະບອບສັງຄົມ ນິຍົມ, ທິດສະດີສັງຄົມນິຍົມ ແລະ ວັດທະນະທຳສັງຄົມນິຍົມ. ດ້ວຍເຫດນັ້ນ ການພັດທະນາຄົນໃຫ້ຮັບຮູ້ເຂົ້າໃຈ ແລະ ປະຕິບັດ ອຸດົມການສັງຄົມນິຍົມ ແມ່ນປັດໄຈທີ່ຂາດບໍ່ໄດ້ໃນການສ້າງ ລະບອບປະຊາທິປະໄຕປະຊາຊົນ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ.

ພັດທະນາຄົນ ໝາຍເຖິງການພັດທະນາພະນັກງານ-ລັດຖະກອນ ໃຫ້ມີຄວາມຮັບຜິດຊອບຕໍ່ການປະຕິບັດອຸດົມການສັງຄົມນິຍົມ. ສະນັ້ນ, ການພັດທະນາພະນັກງານ-ລັດຖະກອນ ໃຫ້ເປັນຄົນໃໝ່ສັງຄົມນິຍົມນັ້ນ ແມ່ນມີບົດບາດສຳຄັນ, ຍ້ອນວ່າພະນັກງານມີບົດ ບາດຕັດສິນຜົນໄດ້ຜົນເສຍ ໃນການຈັດຕັ້ງປະຕິບັດແນວທາງນະໂຍ ບາຍຂອງພັກ, ການກໍ່ສ້າງພະນັກງານໄດ້ດີ, ມີຄຸນນະພາບ, ມີຈັນຍາ ບັນ, ມີຄວາມຮັບຜິດຊອບຕໍ່ຕົນເອງ, ຕໍ່ອາຊີບ, ຕໍ່ການຈັດຕັ້ງ, ຕໍ່ສັງ ຄົມ ແລະ ປະຊາຊົນ ແມ່ນຄວາມຮຽກຮ້ອງຕ້ອງການຂອງລະບອບປະ ຊາທິປະໄຕປະຊາຊົນ. ພະນັກງານ-ລັດຖະກອນ ແມ່ນຜູ້ຮັບໃຊ້ປະຊາ ຊົນ, ພະນັກງານຕ້ອງທຸກກ່ອນປະຊາຊົນ, ສະໜຸກຕາມຫຼັງປະຊາຊົນ. ການຍົກສູງຄຸນນະພາບຂອງພະນັກງານ, ລັດຖະກອນໃນລະບົບ ລັດຖະການ ແມ່ນຄວາມຮຽກຮ້ອງຕ້ອງການຂອງພັກ ແລະ ທົ່ວ ສັງຄົມ.

ພັດທະນາຄົນ ແມ່ນພັດທະນາທາງດ້ານການສຶກສາ, ປັນຍາ ຄວາມຮູ້: ມາດຕະຖານລະດັບການສຶກສາ ຊຶ່ງເປັນພື້ນຖານຄວາມຮູ້ ເບື້ອງຕົ້ນ ຊ່ວຍໃຫ້ຜູ້ອອກແຮງງານກຳໄດ້ຄວາມຮູ້ດ້ານວິຊາສະເພາະ ຮັບໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງຕົນ. ນີ້ເປັນບ່ອນອີງ ສຳຄັນໃຫ້ແກ່ການຂຶ້ນແຜນບຳລຸງ, ກໍ່ສ້າງບຸກຄະລາກອນໃຫ້ຮັບປະ ກັນຄຸນນະພາບໃນແຕ່ລະໄລຍະ; ອົງການໃດມີຊັບພະຍາກອນທີ່ມີ ລະດັບຄວາມຮູ້ສູງລະດັບການພັດທະນາ ຂອງອົງການນັ້ນຍິ່ງສູງ. ດ້ານວິຊາສະເພາະ ເປັນມາດຕະຖານທີ່ໄດ້ນຳໃຊ້ເພື່ອຕີລາຄາກຳລັງ ຄວາມສາມາດທີ່ຈຳເປັນ ຂອງຜູ້ອອກແຮງງານ, ເປັນພື້ນຖານໃຫ້ແກ່ ອົງການ ຈັດຕັ້ງດຳເນີນການຈັດວາງ, ສັບຊ້ອນເຂົ້າໃນການເຮັດວຽກ ຢ່າງສອດ ຄ່ອງ. ອົງການຈັດຕັ້ງຈະອີງໃສ່ລະດັບວິຊາສະເພາະ ຂອງ ກຳລັງແຮງງານ ເພື່ອກຳນົດທິດທາງໃນການພັດທະນາຄົນໃຫ້ແກ່ ອົງການຕົນ. ມາດຕະຖານທາງດ້ານທັກສະໃນການພົວພັນ ແມ່ນ ສ້າງໃຫ້ຄົນມີຄຸນສົມບັດນິ້ມນອນ ໃນການພົວພັນປະສານງານ, ມີ ຫົວຄິດປະດິດສ້າງ, ຮູ້ເຮັດວຽກເປັນກຸ່ມ, ມີຄວາມສະດຸ້ງໄວ, ຮູ້ປັບ ຕົວໄວ... ອັນນີ້ເປັນປັດໄຈຕັດສິນຜົນສຳເລັດ ໃນການປະຕິບັດ ວຽກງານ. ແຕ່ລະອົງ ການ ລ້ວນແຕ່ຕ້ອງການບຸກຄະລາກອນທີ່ມີ ຄຸນສົມບັດ, ມີທັກສະໃນການພົວພັນປະສານງານ; ບຸກຄະລາກອນ ທີ່ໄດ້ຮັບການປະກອບຄວາມຮູ້ດ້ານທັກສະການພົວພັນດີ ແມ່ນຈະ ມີຄວາມກ້າວໜ້າໄວ, ດ້ວຍທ່າແຮງຄວາມສາມາດ, ສະມັດຕະພາບ ແລະ ປະສິດທິຜົນໃນການປະຕິບັດວຽກງານຂອງຕົນ.

ພັດທະນາຄົນ ແມ່ນສ້າງຄົນໃຫ້ມີສຸຂະພາບເຂັ້ມແຂງທາງ ດ້ານຮ່າງກາຍ ແລະ ຈິດໃຈ: ຜູ້ອອກແຮງງານຕ້ອງມີສຸຂະພາບຮ່າງ ກາຍ, ຈິດໃຈ, ສັງຄົມທີ່ເຂັ້ມແຂງ. ດ້ານຮ່າງກາຍສະແດງເຖິງຄວາມ ຄ່ອງແຄ້ວ, ໄຫວພິບ ແລະ ມີຄວາມທົນທານຕໍ່ສະພາບແວດລ້ອມ ຫຍຸ້ງຍາກ. ພັດທະນາຄົນໃໝ່ສັງຄົມນິຍົມ ແມ່ນພັດທະນາ ວັດທະນະ ທຳທາງດ້ານຈິດໃຈ. ຍ້ອນວ່າຄວາມເຂັ້ມແຂງດ້ານຈິດໃຈ ແມ່ນມາດຕະຖານໜຶ່ງ ໃນການຕີລາຄາຄຸນນະພາບຂອງຄົນສັງຄົມ ນິຍົມ. ຜູ້ອອກແຮງງານຕ້ອງມີຄຸນສົມບັດ, ທັດສະນະ ແລະ ການ ປະພຶດສອດຄ່ອງກັບບັນດາມາດຕະຖານທີ່ກຳນົດໄວ້. ຕາມປົກກະຕິ ແລ້ວ ແຕ່ລະອົງການ ແມ່ນມີຕາຕະລາງຕີລາຄາສະເພາະ ກ່ຽວກັບ ຄວາມເຂັ້ມແຂງທາງດ້ານຈິດໃຈ: ຄຸນທາດການເມືອງ, ທັດສະນະ, ແບບ ແຜນການດຳລົງຊີວິດ, ຄວາມເປັນມືອາຊີບທັງໝົດນີ້ ແມ່ນ ເປັນມາດຕະຖານ ທີ່ບັນດາອົງການໄດ້ກຳນົດອອກ. ຜູ້ອອກແຮງງານ ເຖິງຈະມີຄວາມເກັ່ງກ້າ, ສາມາດພຽງໃດ ແຕ່ຖ້າການປະພຶດຕົນບໍ່ດີ ໃນເວລາເຮັດວຽກ ແມ່ນບໍ່ສາມາດຮັບປະກັນໄດ້ຄຸນນະພາບຄົນສັງ ຄົມນິຍົມ. ເຖິງວ່າມາດຕະຖານຂອງແຕ່ລະອົງການ, ນັບທັງອົງການ ລັດ ແລະ ເອກະຊົນ ລ້ວນແຕ່ມີການວາງມາດຕະຖານທາງດ້ານຈິດ ໃຈທີ່ແຕກຕ່າງກັນ. ແຕ່ເບິ່ງລວມແລ້ວ, ບັນດາມາດຕະຖານທີ່ຖືກນຳ ໃຊ້ຢ່າງແຜ່ຫຼາຍທີ່ສຸດ ແມ່ນ: ດ້ານຄຸນທາດການເມືອງ, ຄຸນສົມ ບັດ ສິນທຳປະຕິວັດ ໃນການປະກອບອາຊີບ; ດ້ານທັດສະນະຫຼັກໝັ້ນ ແລະ ສະຕິຄວາມຮັບຜິດຊອບໃນການເຮັດວຽກ; ດ້ານແບບແຜນວິທີ ເຮັດວຽກ ແລະ ຄວາມເປັນມືອາຊີບທາງດ້ານທັກສະ, ວິຊາການ, ປະສົບການໃນອາຊີບ.

ສັງລວມແລ້ວ, ພັດທະນາຄົນແມ່ນການສ້າງໃຫ້ຄົນມີປັນຍາ ຄວາມຮູ້, ມີຄວາມເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມ, ມີລະດັບການ ສຶກສາ, ເຕັກນິກວິຊາການ, ມີສຸຂະພາບແຂງແຮງ ແລະ ມີຄວາມສີວິ ໄລດ້ານຈິດໃຈ, ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ຮັບໃຊ້ພາລະກິດສ້າງສັງຄົມນິຍົມຢ່າງສະເໝີຕົ້ນສະເໝີປາຍ.

**II. ພຶດຕິກຳການນຳພາຂອງພັກ ໃນການພັດທະນາຄົນ ເພື່ອ ຕອບສະໜອງຄວາມຕ້ອງການພັດທະນາປະເທດຊາດ ໃນໄລຍະຜ່ານ ມາ.**

ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍ ພັກໄດ້ກຳນົດທິດ ທາງກ້າວຂຶ້ນສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານລະບອບທຶນນິຍົມ ດ້ວຍ ການສ້າງ ແລະ ຜັນຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ຕາມ ທິດສັງຄົມນິຍົມ. ໃນໄລຍະຕົ້ນ ປະທານ ໄກສອນ ພົມວິຫານ ໄດ້ ເນັ້ນໃສ່ເຮັດການປະຕິວັດດ້ານແນວຄິດວັດທະນະທຳ ເພື່ອສ້າງຄົນໃ ໝ່ສັງຄົມນິຍົມ. ການດຳເນີນການປະຕິວັດດັ່ງກ່າວນີ້ ແມ່ນເພື່ອ “ກໍ່ສ້າງວັດທະນະທຳໃໝ່ທີ່ມີເນື້ອໃນສັງຄົມນິຍົມ ທີ່ສະແດງອອກ ເຖິງລັກສະ ນະຊາດ, ລັກສະນະປະຊາຊົນ, ທັງສ້າງຄົນໃໝ່ສັງຄົມ ນິຍົມ, ກ່ອນອື່ນໝົດ ແມ່ນສ້າງຄົນທີ່ມີນ້ຳໃຈຮັກຊາດ, ຮັກສັງຄົມ ນິຍົມ, ມີນ້ຳໃຈສາ ກົນສັງຄົມນິຍົມ, ອອກແຮງງານຢ່າງມີລະບຽບ ວິໄນ ມີຜະລິດຕະພາບ, ດຳລົງຊີວິດ ແລະ ເຮັດວຽກຕາມຫຼັກການທີ່ ວ່າ: ແຕ່ລະຄົນເພື່ອທຸກຄົນ ທຸກຄົນເພື່ອແຕ່ລະຄົນ” (ພົມວິຫານ, ກ. , 1986, ໜ້າ 50).

ນັບແຕ່ປີ 2011 ເປັນຕົ້ນມາ, ແນວທາງໃນການພັດທະນາຄົນ ຂອງພັກ ຍິ່ງມີລັກສະນະພົ້ນເດັ່ນ ແລະ ເປັນຍຸດທະສາດທີ່ຊັດເຈນ ຫຼາຍຂຶ້ນ ເມື່ອກອງປະຊຸມໃຫຍ່ ຄັ້ງທີ IX ພັກປະຊາຊົນປະຕິວັດລາວ ໄດ້ກຳນົດເອົາ 4 ບຸກທະລຸ ເປັນແນວທາງໃນການພັດທະນາ ເສດຖະກິດ-ສັງຄົມ; ໜຶ່ງໃນການບຸກທະລຸນັ້ນ ແມ່ນກ່ຽວພັນກັບການ ພັດທະນາຄົນ ກໍ່ຄືຊັບພະຍາກອນມະນຸດ: “ບຸກທະລຸດ້ານການສຶກສາ ໃຫ້ມີຄຸນນະພາບສູງ, ລົງທຶນໃສ່ຂົງເຂດການສຶກສາ ແລະ ສາທາລະນະ ສຸກ ຕາມກຳນົດໝາຍທີ່ວາງໄວ້, ນຳໃຊ້ເສດຖະກິດພຸມປັນຍາໃຫ້ຫຼາຍ ຂຶ້ນ, ສ້າງກຳລັງແຮງງານ ແລະ ວິຊາການທີ່ຊຳນານງານ, ສ້າງຄົນແຖວ ນັກທຸລະ ກິດ, ນັກຄຸ້ມຄອງ, ຜູ້ຈັດການທີ່ສົມຄູ່ກັບການພັດທະນາ ເສດຖະກິດ ຕາມກົນໄກຕະຫຼາດ ແລະ ການເຊື່ອມໂຍງເສດຖະກິດ ສາກົນ” (ວາລະສານ ອາລຸນໃໝ່, 2011, ໜ້າ 70). ໃນກອງປະຊຸມ ໃຫຍ່ຄັ້ງທີ X ພັກປະຊາຊົນປະຕິວັດລາວ ປີ 2016 ນັ້ນ, ກອງປະຊຸມ ດັ່ງ ກ່າວກໍ່ ໄດ້ ມີ ມະຕິ ຢືດໝັ້ນ ແນວທາງ 4 ບຸກທະລຸ ໃນການ ພັດທະນາເສດຖະກິດ-ສັງ ຄົມ ພ້ອມທັງໄດ້ມີທິດຊີ້ນຳພິເສດ ໂດຍ

ຍົກສູງບົດບາດຄວາມສຳຄັນ ຂອງການພັດທະນາຄົນ ຕອບສະໜອງ ກັບການສ້າງສາພັດທະນາປະ ເທດຊາດໃນໄລຍະໃໝ່ ໂດຍໄດ້ເນັ້ນ ໜັກວ່າ "ຖືເອົາການພັດທະນາຊັບພະຍາກອນມະນຸດ ເປັນປັດໃຈ ຕັດສິນການພັດທະນາປະເທດຊາດໃນໄລຍະໃໝ່ ຄຸ້ມຄອງ ແລະ ພັດທະນາສັງຄົມຢ່າງປະດິດສ້າງ ເພື່ອສ້າງສັງຄົມຍຸຕິທຳ ແລະ ສີວິໄລ" (ວາລະສານ ອາລຸນໃໝ່, 2016, ໜ້າ 43). ເມື່ອກ້າວມາສູ່ ໄລຍະການຜັນຂະຫຍາຍແນວທາງປ່ຽນແປງໃໝ່ເຂົ້າສູ່ລວງເລິກນັ້ນ ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ໃຫ້ ທັດສະນະຊີ້ນຳຢ່າງຊັດເຈນ, ເລິກເຊິ່ງ ແລະ ໜັກ ແໜ້ນວ່າ: "ພັດທະນາຄົນລາວໃຫ້ສາມາດຕອບສະໜອງຄວາມຮຽກຮ້ອງ ຕ້ອງການ ຂອງການພັດທະນາປະເທດຊາດໃນໄລຍະໃໝ່" (ວາລະ ສານ ອາລຸນໃໝ່, 2021, ໜ້າ 68). ເພື່ອຕອບສະໜອງກັບຈິດໃຈ ຊີ້ ນຳຂອງພັກ ໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງ ລັດຖະບານ ໄດ້ກຳນົດ 6 ເປົ້າໝາຍແຫ່ງການພັດທະນາອອກມາຢ່າງ ຈະແຈ້ງ, ໃນນີ້ເປົ້າໝາຍທີ 2 ໄດ້ກຳນົດແຈ້ງວ່າ: "ພັດທະນາຊັບພະ ຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມ ຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳ ໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງ ມູນຄ່າເພີ່ມໃຫ້ແກ່ການຜະລິດ ແລະ ການບໍລິການ" (ວາລະສານ ອາລຸນໃໝ່, 2021, ໜ້າ 125).

ບັນດາທັດສະນະຊີ້ນຳ ຂອງພັກປະຊາຊົນປະຕິວັດລາວ ໃນ ແຕ່ລະໄລຍະນັ້ນ ໄດ້ພິສູດໃຫ້ເຫັນແຈ້ງ, ສະແດງອອກໃນຜົນສຳ ເລັດແຫ່ງການນຳພາ ໃນການພັດທະນາພະນັກງານ-ລັດຖະກອນ, ພັດທະນາການສຶກສາ, ການພັດທະນາຄົນດ້ານຮ່າງກາຍ ແລະ ພັດ ທະນາຄົນດ້ານຈິດໃຈດັ່ງນີ້:

**2.1. ຜົນສຳເລັດການນຳພາພັດທະນາຄົນໃນໄລຍະຜ່ານມາ.**

1). ພັດທະນາຄົນດ້ານອຸດົມການສັງຄົມນິຍົມ.

ໃນໄລຍະແຫ່ງການບູລະນະລະບອບປະຊາທິປະໄຕ ປະຊາຊົນ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ ປັດຈຸບັນແມ່ນ ຮຽກຮ້ອງເຖິງການພັດທະນາຄົນດ້ານອຸດົມການ. ພຶດຕິກຳພັດທະນາ ຄົນໃນດ້ານນີ້ສ່ວນໃຫຍ່ແມ່ນສຸມໃສ່ຖັນແຖວພະນັກງານ-ລັດຖະກອນ ເພື່ອຮັບໃຊ້ການປະຕິບັດໜ້າທີ່ການເມືອງ ກໍ່ຄືອຸດົມ ການຂອງພັກ. ພັກຢັ້ງຢືນວ່າ: "ພະນັກງານ ແມ່ນກຳລັງການເມືອງ ຫຼັກແຫຼ່ງໃນພາລະກິດປະຕິ ວັດຂອງພັກເຮົາ, ເປັນຜູ້ຕັດສິນຜົນໄດ້-ຜົນເສຍ ຂອງການຈັດຕັ້ງປະ ຕິບັດແນວທາງ, ນະໂຍບາຍຂອງພັກ, ຂອງລັດ, ຕ້ອງໄດ້ຮັບການນຳພາ, ສຶກສາອົບຮົມປົ້ນເພາະຈາກພັກ, ຝຶກຝົນຫຼໍ່ຫຼອມໃຫ້ເປັນຜູ້ຈົງຮັກພັກດີ, ຮັບໃຊ້ປະຊາຊົນ ແລະ ປະເທດຊາດດ້ວຍຄວາມບໍລິ ສຸດໃຈ, ຜ່ອງໃສ, ມີຄວາມ ຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ" (ຄະນະບໍລິຫານງານສູນກາງພັກ, 2021, ໜ້າ 2). ບົນພື້ນຖານດັ່ງ ກ່າວ ໃນໄລຍະຜ່ານມາ ພັກເຮົາໄດ້ ຖືເອົາການກໍ່ສ້າງພະນັກງານ ໃຫ້ມີຫຼັກໝັ້ນການເມືອງ ດ້ວຍການ ບຳລຸງທາງດ້ານທິດສະດີການເມືອງ ແລະ ດ້ານວິຊາສະເພາະຢ່າງຕໍ່ ເນື່ອງ. ພະນັກງານ-ລັດຖະກອນ ແມ່ນຍັງຈົງຮັກພັກດີຕໍ່ພັກ, ຕໍ່ ປະເທດຊາດ, ພະນັກງານສ່ວນຫຼາຍແມ່ນຍັງຮັກສາໄດ້ຄຸນທາດການ ເມືອງ; ຍັງຢຶດໝັ້ນຕໍ່ອຸດົມການສັງຄົມນິຍົມ ບໍ່ມີການປ່ຽນແປງ; ຢຶດ ໝັ້ນທັດສະນະຊີ້ ນຳ ຂອງປະທານໄກສອນ ພົມວິຫານ ດ້ວຍການ ຫັນປ່ຽນທາງດ້ານຈິນຕະນາການ,ເຂົ້າໃຈໃໝ່ໃຫ້ເລິກເຊິ່ງ ແລະ ເຖິງ ຖອງກ່ຽວກັບສັງຄົມນິຍົມ, ກ້າເບິ່ງຄວາມຈິງ, ມີຄວາມເດັດດ່ຽວແກ້ ໄຂທັດສະນະອັດຕະວິໄສ,ຮ້ອນຮົນຟ້າວຟັ່ງ. ສິ່ງທີ່ພົ້ນເດັ່ນໃນ ປັດຈຸບັນ ລັດໄດ້ກຳນົດຍຸດທະສາດການພັດທະນາຄົນ ກໍ່ຄືພັດທະນາ ຊັບພະຍາກອນມະນຸດແຫ່ງຊາດ2023-2025 ໃນນີ້ ໄດ້ສຸມໃສ່ຍຸດທະ ສາດເພີ່ມທະວີວຽກງານການ ເມືອງ-ແນວຄິດ ເຮັດໃຫ້ທົ່ວປວງຊົນ ເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມ.

ໃນແຕ່ລະປີ, ສູນກາງພັກໄດ້ມອບຄວາມຮັບຜິດຊອບໃຫ້ສະ ຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເປັນໃຈກາງໃນການ ສິດສອນທິດສະດີການເມືອງ ແລະ ການປົກຄອງ, ເຜີຍແຜ່ແນວຄິດ ທິດສະດີ ກ່ຽວກັບສັງຄົມນິຍົມ, ສ້າງຄວາມຮັບຮູ້,ຄວາມເຂົ້າໃຈ ຕໍ່ ກັບທິດສະດີປະຕິວັດທີ່ ສປປ ລາວ ກຳລັງເດີນຕາມດ້ວຍການດຳເນີນ ການກໍ່ສ້າງ ແລະ ບຳລຸງຫຼາຍລະບົບຄື: ລະບົບກໍ່ສ້າງປະລິນຍາໂທ; ປະລິນ ຍາຕີ, ອະນຸປະລິນຍາ ຢູ່ສູນກາງ; ຊັ້ນກາງ, ອະນຸປະລິຍາ ຢູ່ ທ້ອງຖິ່ນ. ນອກນີ້ຍັງໄດ້ດຳເນີນການເຜີຍແຜ່ທິດສະດີການເມືອງ ກໍ່ຄື ທິດສະດີວ່າດ້ວຍສັງຄົມນິຍົມ ໃນລະບົບບຳ ລຸງເຊັ່ນ: ບຳລຸງທິດສະ ດີການເມືອງຊັ້ນສູງເລັ່ງລັດ 5 ເດືອນ; ລະບົບບຳລຸງນາຍບ້ານ, ບຳລຸງ ທິດສະດີການເມືອງ 45 ວັນ; ລະບົບບຳລຸງໃຫ້ແກ່ຄະນະປະຈຳພັກ ເມືອງ, ກຳມະ ການພັກເມືອງ 10 ວັນ ແລະ ບຳລຸງໃຫ້ແກ່ນັກທຸລະກິດ ຢູ່ວິສາຫະກິດຂອງລັດ ແລະ ເອກະຊົນໄລຍະ 5 ວັນ. ນອກຈາກນີ້ ສູນກາງຍັງໄດ້ຮັບຮອງເອົາຫຼັກສູດໃໝ່ ແລະ ໄດ້ຈັດຕັ້ງປະຕິບັດແລ້ວ ມີ: ຫຼັກສູດບຳລຸງທິດສະດີການເມືອງຂັ້ນຕົ້ນ 3 ເດືອນ, ຂັ້ນກາງ 6 ເດືອນ ແລະ ຂັ້ນສູງ 9 ເດືອນ. ສຳລັບສົກ (2022-2023) ໄດ້ບຳລຸງ ທິດສະດີການເມືອງຂັ້ນຕົ້ນ ໄດ້ 1,145 ຄົນ, ຂັ້ນກາງ ໄດ້ 400 ຄົນ, ຂັ້ນສູງ ໄດ້ 238 ຄົນ (ກະຊວງສຶກສາທິການ ແລະ ກິລາ, 2021, ໜ້າ 5). ຜ່ານການກໍ່ສ້າງ ບຳລຸງພະນັກງານນຳພາ-ຄຸ້ມຄອງ ເຫັນວ່າ ຄວາມ ຮູ້ຄວາມເຂົ້າໃຈກ່ຽວກັບສັງ ຄົມນິຍົມ ແລະ ເສັ້ນທາງກ້າວຂຶ້ນສັງຄົມ ນິຍົມ ຢູ່ປະເທດເຮົາ ມີຄວາມກະຈ່າງແຈ້ງຂຶ້ນ ເຮັດໃຫ້ພະນັກງານ-ລັດຖະກອນ ຢຶດໝັ້ນຢ່າງໜັກແໜ້ນຕໍ່ອຸດົມການສັງຄົມນິຍົມ.

ພະນັກງານ-ລັດຖະກອນ ສ່ວນໃຫຍ່ແມ່ນໄດ້ຮັບການ ປະກອບ ຄວາມຮູ້ທາງດ້ານລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ຮູ້ໝູນໃຊ້ຢ່າງປະດິດສ້າງເຂົ້າໃນການປະຕິບັດໜ້າທີ່ ການເມືອງ ຂອງແຕ່ລະກົມກອງ, ທ້ອງຖິ່ນຢ່າງເໝາະສົມ. ພະນັກງານ ນຳພາ-ຄຸ້ມຄອງ ສ່ວນຫຼວງຫຼາຍແມ່ນມີອຸດົມຄະຕິປະຕິວັດຖືກຕ້ອງ, ມີທາດແທ້ຊົນຊັ້ນກຳມະກອນ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດ ຊາດ ແລະ ປະຊາຊົນ. ເຊີດຊູພັກ, ສ້າງບົດບາດຂອງພັກເປັນແກນນຳ ໃນລະບົບການເມືອງຢ່າງສົມກຽດ, ເປັນແບບຢ່າງໃນການດຳລົງຊີວິດ, ສ້າງໄດ້ຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກປະຊາຊົນ.

ຖັນແຖວພະນັກງານ-ລັດຖະກອນ ຢູ ສປປ ລາວ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບນັບມື້ດີຂຶ້ນ. ຈຳນວນພະນັກງານ-ລັດຖະກອນ ໃນກົງຈັກການຈັດຕັ້ງທົ່ວລະບົບການເມືອງ ທັງຢູ່ "ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີທັງໝົດ172,341 ຄົນ, ຍິງ 82,366 ຄົນ; ໃນນີ້, ຂັ້ນສູນກາງ ມີ 25,463ຄົນ, ຂັ້ນແຂວງ 35,512 ຄົນ, ຂັ້ນເມືອງ 111,366 ຄົນ" (ກະຊວງພາຍໃນ, 2023), ອັດຕາສ່ວນຂອງພະນັກງານຄິດໄລ່ສະເລ່ຍໃສ່ພົນ ລະເມືອງ, ປີ 65/1 :1995; ປີ 40/1 :2020ແລະ ປັດຈຸບັນ .25/1 ສຳລັບປີ 2023 ຈຳນວນລັດຖະກອນມີລະດັບປະລິນຍາເອກ 766 ຄົນ, ລະດັບເໜືອປະລິນຍາໂທ 897 ຄົນ, ປະລິນຍາໂທ 12, 726ຄົນ, ເໜືອປະລິນຍາຕີ ,199ປະລິນຍາຕີ 61, 965ຄົນ, ອະນຸປະລິນຍາ 60, 914ຄົນ ,ຊັ້ນກາງ 30, 189ຄົນ, ຊັ້ນຕົ້ນ 4, 236ຄົນ, ບໍ່ມີຊັ້ນ 449 ຄົນ (ກະຊວງພາຍໃນ, 2023).

ການສ້າງພະນັກງານ-ລັດຖະກອນ ໃຫ້ມີຄວາມຮູ້ ແລະ ເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມ ແມ່ນບັນຫາສຳຄັນຂອງພັກ, ຜ່ານມາພັກໄດ້ຈັດຕັ້ງບຳລຸງທິດສະດີການເມືອງຂັ້ນຕົ້ນ, ຂັ້ນກາງ, ຂັ້ນສູງ ຕາມລະບອບການຮຽນທິດສະດີການເມືອງ ເຊັ່ນ: ບຳລຸງຍົກລະດັບທິດສະດີໃຫ້ພະນັກງານ-ລັດຖະກອນທີ່ເປັນມະຫາຊົນກ້າວໜ້າ ແລະ ສະມາຊິກພັກ ໃນທຸກຂົງເຂດວຽກງານ ໃນສົກ -2022 2023 ໄດ້ບຳລຸງທິດສະດີການເມືອງຂັ້ນຕົ້ນ ໄດ້ 1,514 ຄົນ, ຂັ້ນກາງ ໄດ້ 400 ຄົນ ແລະ ຂັ້ນສູງ ໄດ້ 238 ຄົນ (ກະຊວງສຶກສາທິການ ແລະ ກິລາ, 2021, ໜ້າ 5). ພ້ອມທັງມີການຄົ້ນຄວ້າ ແລະ ສ້າງເອກະສານ ກ່ຽວກັບວຽກງານໂຄສະນາອົບຮົມການເມືອງ-ແນວຄິດ ໃຫ້ທົ່ວສັງ ຄົມ; ມີການປັບປຸງຫຼັກສູດທິດສະດີການເມືອງ ແລະ ຈັດຕັ້ງບຳລຸງທິດສະດີຢ່າງຕໍ່ເນື່ອງ; ພ້ອມດຽວກັນນີ້ ກໍ່ຍັງໄດ້ສົ່ງພະນັກງານໄປບຳລຸງທິດສະດີການເມືອງຢູ່ ສສ. ຫວຽດນາມ ແລະ ສປ. ຈີນ ໃນແຕ່ລະປີຢ່າງເປັນປົກກະຕິ.

ພື້ນເດັ່ນໃນນີ້ ພັກໄດ້ເຫັນໄດ້ຄວາມສຳຄັນໃນການພັດທະນາພະນັກງານໜຸ່ມ ຊຶ່ງເປັນເປົ້າໝາຍສຳຄັນໃນການພັດທະນາປະເທດຊາດ. ໃນນີ້ ພັກໄດ້ເອົາໃຈໃສ່ນຳພາການແຂ່ງຂັນຊາວໜຸ່ມ 4 ບຸກຄື ບຸກທາງດ້ານແນວຄິດ, ບຸກດ້ານການຝຶກຝົນຫຼໍ່ຫຼອມຮໍ່າຮຽນ, ບຸກດ້ານວຽກງານການຈັດຕັ້ງ ແລະ ບຸກດ້ານວິຊາຊີບ-ສ້າງວຽກເຮັດງານທຳ. ບົນພື້ນຖານດັ່ງກ່າວເຮັດໃຫ້ພະນັກງານໜຸ່ມ ມີສະຕິສູງຕໍ່ການຈັດຕັ້ງ, ຍາດໄດ້ຜົນສຳເລັດໃໝ່ ແລະ ໄດ້ຮັບການຍ້ອງຍໍຢ່າງຕໍ່ເນື່ອງ. ປີ 2023 ໄດ້ມີຖັນແຖວພະນັກງານ, ສະມາຊິກພັກໜຸ່ມ ໄດ້ຮັບການຍ້ອງຍໍສັນລະເສີນ ໃນບັ້ນຂະບວນການແຂ່ງຂັນຮັກຊາດ, ສ້າງບ້ານພັດທະນາ ແລະ ຜັນຂະຫຍາຍວຽກງານ 3 ສ້າງ ເຂົ້າສູ່ລວງເລີກໃນທົ່ວປະເທດ ຊຶ່ງສະແດງອອກໃນການຍ້ອງຍໍຜົນງານດັ່ງນີ້": "ຫຼຽນນາມມະຍົດວິລະຊົນແຮງງານ ຈຳນວນ 1 ຄົນ, ຫຼຽນນາມມະຍົດພັດທະນາດີເດັ່ນແຫ່ງຊາດ ຈຳນວນ 2 ຄົນ, ຫຼຽນໄຊແຮງງານ ຊັ້ນ I, ຊັ້ນ II ຈຳນວນ 6,168 ຄົນ, ຫຼຽນໄຊແຮງງານ ຊັ້ນ III ຈຳນວນ 10,942 ຄົນ, ຫຼຽນກາແຮງງານ ຈຳນວນ 19,715 ຄົນ, ໃບຍ້ອງຍໍລັດຖະບານ ຈຳນວນ 46,721 ຄົນ" (ກະຊວງພາຍໃນ, 2020, ໜ້າ 1).

2). ການພັດທະນາຄົນດ້ານການສຶກສາ.

ພັກປະຊາຊົນປະຕິວັດລາວ ໄດ້ນຳພາພັດທະນາການສຶກສາ, ຍົກສູງສະຕິປັນຍາ, ມັນສະໝອງຂອງຄົນ ແມ່ນເລີ່ມຈາກການສຶກສາ ຕັ້ງແຕ່ຫົວທີ; ພັກປະຊາຊົນປະຕິວັດລາວ ໄດ້ຢັ້ງຢືນວ່າ: "ເດັດດ່ຽວນຳເອົາການສຶກສາໄປກ່ອນບາດກ້າວໜຶ່ງ" (ພົມວິຫານ, ກ., ໜ້າ 20), ໃນນີ້ ພັກໄດ້ຢືນຢັນທັດສະນະພື້ນຖານ 5 ປະການວ່າ: ໃນນີ້ພັກໄດ້ຢືນ ຢັນທັດສະນະພື້ນຖານ 5 ປະການວ່າ: .(1ໂຮງຮຽນແມ່ນເຄື່ອງມືຂອງຜະເດັດການກຳມາຊີບ; .(2ການສຶກສາຕ້ອງຮັບໃຊ້ແນວທາງ ແລະໜ້າທີ່ປະຕິວັດຂອງພັກ; .(3ການສຶກສາຕ້ອງຮັບໃຊ້ການຜະລິດ; .(4ການສຶກສາແມ່ນພາລະກິດ ຂອງປະຊາຊົນຜູ້ອອກແຮງງານ; .(5ຄູເປັນຄົນຂອງພັກ. ທັງ 5 ປະການທີ່ກ່າວມານີ້ ພື້ນເດັ່ນແມ່ນພັກຢັ້ງຢືນເຖິງການສ້າງຄົນໃໝ່ສັງຄົມນິຍົມວ່າ: "ແມ່ນຄົນສັງຄົມນິຍົມ ທີ່ມີອຸ ດົມຄະຕິກອມມູນິດອັນເລີກເຊິ່ງ, ມີຄວາມຮັກຊາດ, ຮັກສັງຄົມນິຍົມຢ່າງດູດດື່ມ, ຮັບໃຊ້ປະເທດຊາດ, ເຊື່ອໝັ້ນພັກ, ເຊື່ອໝັ້ນປະຊາຊາຊົນຜູ້ປະຕິວັດ ແລະ ເດັດດ່ຽວເດີນຕາມພັກ, ຮັບໃຊ້ປະຊາຊົນ" (ພົມວິຫານ, ກ., ໜ້າ 20). ການພັດທະນາການສຶກສາທັງພາກລັດ ແລະ ເອກະຊົນ ແມ່ນໄປຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາຄື: ລັກສະນະຊາດ, ລັກສະນະວິທະຍາສາດ ແລະ ທັນສະໄໝ, ລັກສະນະມະຫາຊົນ; 5 ຫຼັກມູນລວມມີ: ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ.

ເມື່ອກ້າວເຂົ້າສູ່ໄລຍະໃໝ່, ໃນເງື່ອນໄຂສະພາບແວດລ້ອມໃໝ່, ວິທະຍາສາດກ້າວໜ້າຂະຫຍາຍຕົວຢ່າງວ່ອງໄວຄືປັດຈຸບັນນີ້, ພັກຍັງສືບຕໍ່ຢັ້ງຢືນວ່າ: "ປັບປຸງຫຼັກສູດແລະວິທີການສິດສອນໃນລະບົບການສຶກສາສາມັນແຕ່ລະຂັ້ນ, ການສຶກສາດ້ານວິຊາອາຊີບ ແລະ ການສຶກສາຊັ້ນສູງ ນັບທັງເນື້ອໃນຫຼັກສູດ ແລະ ວິທີການສິດສອນ... ລັດຕ້ອງຄຸ້ມຄອງ, ນຳໃຊ້ທຶນການສຶກສາຂອງລັດທຸກປະເພດ ເພື່ອດັດສົມການກໍ່ສ້າງຊັບພະຍາກອນມະນຸດ ໃນບັນດາຂະແໜງທີ່ມີຄວາມຈຳເປັນ ແຕ່ພາກສັງຄົມຍັງບໍ່ທັນໃຫ້ຄວາມສົນໃຈທີ່ຈະສຶກສາຮໍ່າຮຽນເທົ່າທີ່ຄວນແຕ່ຕ້ອງຄຸ້ມຄອງເງື່ອນໄຂສິ້ນເຊີ້ ຕິດພັນກັບການຄັດເລືອກນັກຮຽນທີ່ມີພອນສະຫວັນດ້ານຕ່າງໆ ເພື່ອເອົາໄປກໍ່ສ້າງໃຫ້ມີຄຸນນະພາບ" (ອາລະສານ ອາລຸນໃໝ່, 2021, ໜ້າ 69) ບົນພື້ນຖານດັ່ງກ່າວ ໃນໄລຍະຜ່ານມາ ພັກໄດ້ຊີ້ນຳລັດລົງທຶນໃສ່ຂະແໜງການສຶກສາທີ່ສອດ ຄ່ອງ; ການສຶກສາໄດ້ຮັບການພັດທະນາ ແລະ ເຕີບໃຫຍ່ຂະຫຍາຍຕົວໄວສົມຄວນ ແລະ ມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງ ເປັນຕົ້ນແມ່ນບັນດາສະຖາບັນການສຶກສາ ນັບແຕ່ລະດັບກ່ອນໄວຮຽນ ຫາລະດັບມະຫາ ວິທະຍາໄລ ໃນປີ 1985 ມີພຽງແຕ່ 8,435 ແຫ່ງເທົ່ານັ້ນ, ມາເຖິງປີ1995 ເພີ່ມຂຶ້ນເປັນ 9,110 ແຫ່ງ, ປີ 2005

ມີ 10,279 ແຫ່ງ, ປີ2015 ເພີ່ມຂຶ້ນເປັນ 13,104 ແຫ່ງ ແລະ ໃນປີ 2021 ເພີ່ມຂຶ້ນເປັນ 14,317 ແຫ່ງ (ໃນນີ້ ລວມມີໂຮງຮຽນລ້ຽງເດັກ ແລະ ອະນຸບານ 3,544 ແຫ່ງ, ຊັ້ນປະຖົມ 8,813 ແຫ່ງ, ມັດທະຍົມຕົ້ນ 973 ແຫ່ງ, ມັດທະຍົມປາຍ 32 ແຫ່ງ, ມັດທະຍົມສົມບູນ 826 ແຫ່ງ, ຊັ້ນສູງ ແລະ ວິທະຍາໄລ 124 ແຫ່ງ, ມະຫາວິທະຍາໄລ 5 ແຫ່ງ) (ສູນສະຖິຕິແຫ່ງຊາດ, 2021).

ໃນໄລຍະຜ່ານມາ ພັກໄດ້ຊີ້ນຳລັດລົງທຶນໃສ່ຂະແໜງການສຶກສາທີ່ສອດຄ່ອງ; ໂດຍອີງຕາມສະຖິຕິຂອງທະນະຄານໂລກ ໄດ້ຊີ້ໃຫ້ເຫັນວ່າ: ໃນປີ 1992 ລັດຖະບານລາວ ໄດ້ລົງທຶນໃສ່ການສຶກສາ ກວມ 2.3% ຂອງ GDP, ປີ 2002 ກວມເອົາ 2.8% ຂອງ GDP, ປີ 2012 ກວມ 1.8% ຂອງ GDP ແລະໃນປີ 2020 ກວມເຖິງ 2.2% ຂອງ GDP (World Bank, 2022). ອັນນັ້ນ ສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ ແລະ ພະຍາຍາມຢ່າງຕັ້ງໜ້າຂອງລັດ ຕໍ່ກັບການພັດທະນາຊັບພະຍາກອນມະນຸດດ້ານການສຶກສາ.

3). ການພັດທະນາກຳລັງແຮງງານ ໃຫ້ມີຄວາມສາມາດ, ເຕັກນິກ ແລະ ວິຊາການ.

ພັກໄດ້ຖືວ່າການພັດທະນາກຳລັງແຮງງານ ໃຫ້ມີຄວາມສາມາດ, ມີສີມື ແລະ ເຕັກນິກວິຊາການສູງ ເພື່ອແຂ່ງຂັນກັບຕະຫຼາດແຮງງານນັ້ນ ແມ່ນຄວາມຈຳເປັນພາວະວິໄສ ໃນເງື່ອນໄຂວິທະຍາສາດ, ເຕັກໂນໂລຊີ ນັບມື້ຂະຫຍາຍຕົວ. ພັກໄດ້ເນັ້ນວ່າ "ເພີ່ມທະວີການກໍ່ສ້າງ, ບຳລຸງແຫຼ່ງຊັບພະຍາກອນບຸກຄົນໃໝ່ຢ່າງຕໍ່ເນື່ອງສອດຄ່ອງກັບທິດພັດທະນາຄວາມອາດສາມາດປັ່ນຊ້ອນ ຂອງປະເທດ ເພື່ອຮັບປະກັນການສະໜອງບຸກຄະລາກອນທີ່ມີຄຸນນະພາບ ໃຫ້ພາກລັດ ກໍ່ຄືສະໜອງແຮງງານສີມືໃຫ້ແກ່ສັງຄົມ ນັບທັງຊ່ຽວຊານສະເພາະດ້ານໃນແຕ່ລະຂົງເຂດ" (ວາລະສານ ອາລຸນໃໝ່, 2021, ໜ້າ 68). ພັກໄດ້ຊີ້ນຳການພັດທະນາແຮງງານ ມີບາດກ້າວການຂະຫຍາຍຕົວຫຼາຍພໍສົມຄວນ ເພື່ອຕອບສະໜອງຄວາມຕ້ອງການ ແລະ ຍົກສູງຄຸນນະພາບແຮງງານ ໃນການຂັບເຄື່ອນຂະບວນການພັດທະນາເສດຖະກິດ-ສັງຄົມ. ລັດຖະບານກໍ່ ໄດ້ມີການສ້າງ ແລະ ພັດທະນາສູນຝຶກອົບຮົມວິຊາຊີບ, ສູນພັດທະນາສີມືແຮງງານ, ສ້າງຕັ້ງໜ່ວຍງານ ຫຼື ບໍລິສັດຈັດຫາງານ ເພື່ອສ້າງເງື່ອນໄຂອຳນວຍຄວາມສະ ດວກ ໃຫ້ມີການຈ້າງງານ ແລະ ມີວຽກງານເຮັດງານທຳຫຼາຍຂຶ້ນໃນກຸ່ມແຮງງານລາວ ຄ່ຽງຄູ່ກັບການຕ້ານ ແລະ ຈຳກັດອັດຕາສ່ວນວ່າງງານ ທີ່ອາດຈະເກີດຂຶ້ນພາຍໃນສັງຄົມ. ພ້ອມກັນນັ້ນ ໃນການສ້າງສີມືແຮງງານ, ລັດຖະບານຍັງໄດ້ເອົາໃຈໃສ່ສູງ ຕໍ່ກັບສະຫວັດດີການຂອງແຮງງານນຳອີກ ຊຶ່ງສະແດງອອກໄດ້ມີການອອກນິຕິກຳຕ່າງໆ ທີ່ຈຳເປັນໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ເພື່ອປົກປ້ອງສິດແລະ ຜົນປະໂຫຍດອັນຊອບທຳຂອງແຮງງານ ລວມທັງແຮງງານພາຍໃນ ແລະ ຕ່າງປະເທດ. ສ້າງລະບົບການຄຸ້ມຄອງກຳມະກອນ, ຊາວຜູ້ອອກແຮງງານ ເປັນຕົ້ນແມ່ນການສ້າງລະບົບສາຍໃຍການຈັດຕັ້ງແຮງງານ ແລະ ສະຫວັດດີການສັງຄົມ ນັບແຕ່ສູນກາງລົງຮອດທ້ອງຖິ່ນຮາກຖານ ຊຶ່ງປະກອບມີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນຂັ້ນສູນກາງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ໃນຂັ້ນແຂວງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ໃນຂັ້ນເມືອງ; ນອກນັ້ນ ຍັງມີຫ້ອງການທຶນປະກັນສັງຄົມແຫ່ງຊາດ, ສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ ແລະ ບັນດາສູນຈັດຫາງານທີ່ແຈກຢາຍ ຢູ່ໃນຂອບເຂດທົ່ວປະເທດ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, 2022) ຊຶ່ງບັນດາໜ່ວຍງານດັ່ງກ່າວ ມີໜ້າທີ່ເປັນເສນາທິການຮອບດ້ານ ກ່ຽວກັບແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ກັບພັກ-ລັດຖະບານ; ຄຽງຄູ່ກັນນັ້ນ ລັດກໍ່ໄດ້ອະນຸ ຍາດໃຫ້ເອກະຊົນ ແລະ ອົງການຈັດຕັ້ງສາກົນ ມີບົດບາດຫຼາຍຂຶ້ນໃນການສ້າງຕັ້ງໜ່ວຍງານຈັດຫາງານ ແລະ ສ້າງອາຊີບໃຫ້ກັບພົນລະ ເມືອງລາວ ຊຶ່ງສະແດງອອກໃນການສ້າງຕັ້ງໂຄງການສ້າງອາຊີບ ໃຫ້ກັບປະຊາຊົນພົນລະເມືອງລາວ ໃນປີ 1995 ຈຳນວນ 15 ໂຄງການ,ປີ2005 ຈຳນວນ 47 ໂຄງການ, ປີ 2015 ຈຳນວນ 56 ໂຄງການ ແລະປີ2021 ຈຳນວນ 95 ໂຄງການ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, 2022). ນອກນັ້ນຍັງມີບໍລິສັດເອກະຊົນທີ່ ໃຫ້ບໍລິການຈັດຫາງານມີທ່າອ່ຽງເພີ່ ມຂຶ້ ນ ແລະ ຂະຫຍາຍຕົວອອກຢ່າງກວ້າງຂວາງ ຊຶ່ງສະແດງອອກໃນປີ 2017 ມີບໍລິສັດເອກະຊົນທີ່ໃຫ້ບໍລິການຈັດຫາງານພຽງແຕ່ 18 ແຫ່ງ ມາເຖິງປີ 2022 ໄດ້ມີບໍລິສັດເອກະຊົນທີ່ໃຫ້ບໍລິ ການຈັດຫາງານ ໃຫ້ກັບຂະແໜງການຕ່າງໆທັງພາຍໃນ ແລະ ຕ່າງປະ ເທດ ລວມທັງໝົດ 53 ແຫ່ງ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, 2022). ໃນບັນດາ ກົງຈັກ, ຫົວໜ່ວຍວິສາຫະກິດ ແລະ ຫົວໜ່ວຍແຮງງານຕ່າງໆຂອງລັດ ແລະ ເອກະຊົນ ຍັງມີລະບົບການຈັດຕັ້ງກຳມະບານ ທີ່ເຮັດໜ້າທີ່ຕົ້ນຕໍໃນການປົກປ້ອງສິດ, ຜົນປະໂຫຍດຂອງຊາວຜູ້ອອກແຮງງານ ໃນບັນດາຫົວໜ່ວຍແຮງງານຕ່າງໆ. ໃນບາງຫົວໜ່ວຍແຮງງານທີ່ມີສະມາຊິກຫຼາຍ ເປັນຕົ້ນແມ່ນບັນດາໂຮງຈັກໂຮງງານຕ່າງໆ ກໍ່ໄດ້ມີຫ້ອງການສະຫະພັນກຳມະບານລາວ ທີ່ເຮັດໜ້າທີ່ສະເພາະໃນການຕິດຕາມ, ກວດກາການຈັດຕັ້ງປະຕິບັດກົດໝາຍແຮງງານ, ສະພາບແວດລ້ອມຂອງການອອກແຮງງານ ແລະ ປົກປ້ອງສິດຜົນປະໂຫຍດຂອງຊາວຜູ້ອອກແຮງງານ ໃນຫົວໜ່ວຍແຮງງານດັ່ງກ່າວນັ້ນ.

ໝາກຜົນການນຳພາຂອງພັກ ນັບແຕ່ປີ 2005 ເປັນຕົ້ນມາ ຈຳນວນກຳລັງແຮງງານທີ່ເຮັດວຽກໃຫ້ກັບລັດຖະບານ,ລັດວິສາຫະກິດ, ພາກເອກະຊົນ,ໃນຂະແໜງການອຸດສາຫະກຳ,ກະສິກຳແລະການບໍລິການຕ່າງໆເພີ່ມຂຶ້ນເປັນ 141,276 ຄົນ, ມີແຮງງານຕ່າງປະເທດ 9,736 (ສູນສະຖິຕິແຫ່ງຊາດ, 2025, ໜ້າ 26); ປີ 2015 ໄດ້ມີຄວາມຕ້ອງການແຮງງານທັງພາຍໃນ ແລະ ຕ່າງປະເທດ ເພີ່ມຂຶ້ນສູງເຖິງ 45,140 ຄົນ ຈຶ່ງໄດ້ມີການຈັດຫາວຽກງານໃຫ້ກຳລັງແຮງງານ ທັງພາຍໃນ ແລະ ຕ່າງປະເທດ ໃນບັນດາຂະແໜງການກະສິກຳ,ອຸດສາຫະກຳ ແລະ ການບໍລິການບັນລຸເຖິງ 112,020 ຄົນ, ຍິງ 59,140 ຄົນ ,ໃນນີ້ ມີແຮງງານຕ່າງປະເທດ ຈຳນວນ 33.610 ຄົນ, ຍິງ 3,550ຄົນ. ພ້ອມນັ້ນ ແຮງງານໄດ້ຮັບການຝຶກອົບຮົມ, ຍົກລະດັບຄວາມສາມາດສີມືແຮງງານມີເຖິງ 41,490 ເທື່ອຄົນ, ຍິງ 21,110 ຄົນ;ພິເສດໃນ

ໄລຍະນີ້ ໄດ້ມີຜູ້ທີ່ໄດ້ຮັບສິດໃນການປະກັນສັງຄົມໃນພາກລັດ, ລັດ ວິສາຫະກິດ, ຊຸມຊົນພົນລະເມືອງ ແລະ ບັນດາຫົວໜ່ວຍແຮງງານ ເອກະຊົນຕ່າງໆ ບັນລຸເຖິງ 2,057,770 ຄົນ, ຍິງ977,460 ຄົນ (ສູນ ສະຖິຕິແຫ່ງຊາດ, 2015, ໜ້າ 26-27). ມາເຖິງປີ 2021 ຄວາມ ຕ້ອງການດ້ານແຮງງານໄດ້ເພີ່ມຂຶ້ນເປັນ 87,286 ຄົນ, ຍິງ 15,431 ຄົນ; ໄດ້ມີການຝຶກວິຊາຊີບໃຫ້ກັບແຮງງານລາວໄດ້ 21,025 ຄົນ, ຍິງ 9,387 ຄົນ; ສາມາດຈັດຫາວຽກເຮັດງານທຳໃຫ້ກັບແຮງງານ ລາວຢູ່ທັງພາຍໃນ ແລະ ຕ່າງປະເທດໃນຂະແໜງກະສິກຳ, ອຸດ ສາຫະກຳ ແລະ ການບໍລິການ ບັນລຸໄດ້ເຖິງ 20,244 ຄົນ, ຍິງ 5,346 ຄົນ ແລະ ນຳເຂົ້າແຮງງານຕ່າງປະເທດ ຈຳນວນ45.971 ຄົນ , ຍິງ 7,808 ຄົນ. ພ້ອມນັ້ນແຮງງານທີ່ໄດ້ຮັບສິດປະກັນສັງຄົມທັງ ໝົດຈຳນວນ 6,476,652 ຄົນ, ຍິງ 3,372,404 ຄົນ (ສູນສະຖິຕິ ແຫ່ງຊາດ, 2021, ໜ້າ 117-118).

ປີ ,2022ໂຄງປະກອບກຳລັງແຮງງານທີ່ມີວຽກເຮັດງານທຳ ແຍກຕາມໂຄງປະກອບເສດຖະກິດ ແມ່ນປະຕິບັດໄດ້ຄື: ຂະແໜ ງກະສິກຳ ກວມເອົາ 56. ,%8ອຸດສາຫະກຳ ກວມເອົາ 10. %2 ແລະ ການບໍລິການ ກວມເອົາ 32.,%9 ໄດ້ເອົາໃຈໃສ່ເຮັດໃຫ້ອັດຕາ ວ່າງງານຢູ່ໃນລະດັບ 2..%4 ນອກຈາກນີ້ ຍັງໄດ້ສຳເລັດການ ພັດທະນາສີມືແຮງງານ ໃຫ້ຜູ້ບໍ່ມີວິຊາຊີບ, ຜູ້ຕ້ອງການປ່ຽນອາຊີບ, ຜູ້ວ່າງງານ ແລະ ຜູ້ທີ່ຈະເຂົ້າສູ່ຕຳແໜ່ງງານໃໝ່ໃນລະດັບຕ່າງໆ ຕາມ ມາດຕະ ຖານສີມືແຮງງານແຫ່ງຊາດ ໄດ້ທັງໝົດ 35, 761ຄົນ, ເທົ່າ ກັບ %89 ຂອງແຜນການ 5 ປີ. ໄດ້ສຳເລັດການທົດສອບ ມາດຕະຖານສີມືແຮງງານ ຕາມມາດຕະຖານສີມືແຮງງານແຫ່ງຊາດ ແລະ ສາຂາອາຊີບຕ່າງໆ ໄດ້ທັງໝົດ 73. ;%92ໄດ້ປັບປຸງ ແລະ ຂະຫຍາຍຕາໜ່າງຈຸດບໍລິການຈັດຫາງານຂັ້ນແຂວງໄດ້ 2 ແຂວງ ແລະ 33 ເມືອງໃນ 6 ແຂວງ ,ເທົ່າກັບ 91. %66ຂອງແຜນການ 5 ປີ. ຖານຂໍ້ມູນຕະຫຼາດແຮງງານໄດ້ຮັບການພັດທະນາຂຶ້ນເປັນກ້າວໆ ສາມາດເກັບກຳຂໍ້ມູນຄວາມຕ້ອງການແຮງງານ 78,168 ຕຳແໜ່ງ; ໄດ້ສົ່ງເສີມການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດ ພາຍໃນ ແລະ ຕ່າງປະ ເທດ ໄດ້ທັງໝົດ 159, 872ຄົນ, ເທົ່າກັບ 40. %76ຂອງ ແຜນການ 5 ປີ (ກະຊວງສຶກສາທິການ ແລະ ກີລາ, 2021).

4). ພັດທະນາຄົນດ້ານຮ່າງກາຍ.

ພັກເຮົາໄດ້ເອົາໃຈໃສ່ຊີ້ນຳການສົ່ງເສີມສຸຂະພາບ ແລະ ພະ ລານາໄມສົມບູນໃຫ້ພົນລະເມືອງຢ່າງຕໍ່ເນື່ອງ. ພັກໄດ້ຊີ້ນຳ: “ສ້າງ ແລະ ປະຕິບັດຍຸດທະສາດພັດທະນາຄົນ ໃນດ້ານສຸຂະພາບຮ່າງກາຍ ຢ່າງຕໍ່ເນື່ອງ ດ້ວຍການສ້າງລະບົບການບໍລິການສຸຂະພາບໃຫ້ທົ່ວເຖິງ ແລະ ມີຄຸນນະພາບ (ກະຊວງສຶກສາທິການ ແລະ ກີລາ, 2021, ໜ້າ 69). ບົນພື້ນຖານດັ່ງກ່າວ ພື້ນຖານໂຄງລ່າງທາງດ້ານສາທາລະນະ ສຸກແລະ ສິ່ງອຳນວຍຄວາມສະດວກ ທາງດ້ານສຸຂະອະນາໄມຂອງ ພົນລະ ເມືອງ ແມ່ນໄດ້ເຕີບໃຫຍ່ຂະຫຍາຍຕົວໃນຫຼາຍຂົງເຂດ ແລະ ກະຈາຍລົງຮອດເຂດທ້ອງຖິ່ນຫ່າງໄກສອກຫຼີກ; ໃນປີ 1985 ປະເທດເຮົາມີໂຮງໝໍສູນກາງພຽງແຕ່ 4 ແຫ່ງ, ໂຮງໝໍແຂວງ 18 ແຫ່ງ , ໂຮງໝໍ ເມືອງ 107 ແຫ່ງ, ສຸກສາລາປະຈຳເຂດ 994 ແຫ່ງ ລວມທັງ ໝົດທົ່ວປະເທດມີສະຖານທີ່ປິ່ນປົວສຸຂະພາບຂອງພົນລະເມືອງ ພຽງ ແຕ່ 1,123 ແຫ່ງ, ມາເຖິງປີ 2021 ໄດ້ມີໂຮງໝໍສູນກາງເພີ່ມເປັນ 5 ແຫ່ງ, ໂຮງໝໍເມືອງເພີ່ມຂຶ້ນເປັນ 135 ແຫ່ງ ແລະ ບັນດາສຸກສາລາປະ ຈຳເຂດຕ່າງໆ )ໂຮງໝໍນ້ອຍ) ເພີ່ມຂຶ້ນເປັນ 1,075 ແຫ່ງ (ສູນສະຕິຖິ ແຫ່ງຊາດ, 2022).

ພ້ອມດຽວກັນນັ້ນ ໃນປັດຈຸບັນກໍ່ຍັງມີ 10 ສູນທີ່ເຮັດໜ້າທີ່ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດການແພດ ແລະ ປິ່ນປົວ ພະຍາດສະເພາະ ທີ່ກະແຈກກະຈາຍໃນຂອບເຂດທົ່ວປະເທດ ເຊັ່ນ: ສູນຄວບຄຸມພະຍາດຕິດຕໍ່, ສູນອາຫານ ແລະ ຢາ, ສູນປິ່ນປົວ ແລະ ຮັກສາສຸຂະພາບຕາ, ສູນການແພດຟື້ນຟູໜ້າທີ່ການ, ສູນຜິວໜັງ, ສູນ ສື່ສານເພື່ອສຸຂະພາບ ແລະ ສຸຂະສຶກສາ, ສູນໂພສະນາການ, ສູນ ຮັກສາສຸຂະພາບແມ່ ແລະ ເດັກ, ສູນສົ່ງເສີມສຸຂະພາບແມ່ ແລະ ເດັກ, ສູນອະ ນາໄມສິ່ງແວດລ້ອມນ້ຳສະອາດ ແລະ ວິດຖ່າຍ. ພ້ອມນັ້ນ ຍັງ ປະກອບມີ 3 ສະຖາບັນທີ່ເຮັດໜ້າທີ່ໂດຍກົງໃນການສຶກສາຄົ້ນຄວ້າ, ທົດລອງ ແລະ ສ້າງບຸກຄະລະກອນສາທາລະນະສຸກ ເຊັ່ນ: ສະຖາບັນ ສາທາລະນະສຸກສາດ, ສະຖາບັນຄົ້ນຄວ້າຕົ້ນໄມ້ເປັນຢາ ແລະ ສະຖາ ບັນປິດສະເຕ;ນອກນີ້ ຍັງມີສະຖາບັນການສຶກສາທີ່ເຮັດໜ້າທີ່ຄົ້ນຄວ້າ ວິໄຈ ແລະສ້າງບຸກຄະລາກອນການແພດ ທີ່ແຈກຢາຍໃນພາກຕ່າງໆ ຂອງປະເທດອີກຈຳນວນ 9 ແຫ່ງ, ໃນນັ້ນ ຂັ້ນມະຫາວິທະຍາໄລ 1 ແຫ່ງ ຄື:ມະຫາ ວິທະຍາໄລ ວິທະຍາສາດສຸຂະພາບ, ວິທະຍາສາດ ສຸຂະພາບ 3 ແຫ່ງ (ກະຊວງສາທາລະນະສຸກ, 2022).

ສຳລັບຂົງເຂດສາທາລະນະສຸກ ກໍ່ໄດ້ຮັບການປັບປຸງ ແລະ ພັດ ທະນາຢ່າງຕໍ່ເນື່ອງ ຕະຫຼອດໄລຍະແຫ່ງການຈັດຕັ້ງປະຕິບັດແນວທາງ ການປ່ຽນແປງໃໝ່ ທີ່ມີຫຼັກການຂອງພັກ ແລະ ສາມາດຍາດໄດ້ຜົນ ສຳເລັດໃນຫຼາຍດ້ານ ຊຶ່ງສາມາດປັບປຸງ ແລະ ຍົກລະດັບບັນດາຕົວຊີ້ ວັດທີ່ສຳຄັນ ຂອງຄຸນນະພາບ ແລະ ປະສິດທິພາບ ຂອງວຽກງານສາທາ ລະນະສຸກ. ໃນປີ 1986 ພົນລະເມືອງລາວມີອາຍຸຍືນສະເລ່ຍ 52ປີ, ປີ 1996 ເພີ່ມຂຶ້ນເປັນ 56 ປີ, ມາເຖິງປີ 2006 ເພີ່ມຂຶ້ນເປັນ 62 ປີ, ໃນ ປີ 2016 ເພີ່ມຂຶ້ນເປັນ 67 ປີ ແລະປີ 2020 ພົນລະເມືອງລາວ ມີອາຍຸ ຍືນສະເລ່ຍເຖິງ 68 ປີ (The World Bank, 2022); ນັ້ນກໍ່ເປັນ ຄວາມສຳເລັດໜຶ່ງ ຂອງວຽກງານສາທາລະນະສຸກ ທີ່ໄດ້ຮັບການພັດ ທະນາຢ່າງຕໍ່ເນື່ອງ ສາມາດປິ່ນປົວ ແລະ ຮັກສາສຸຂະພາບຂອງຊົນ ພະ ຍາກອນມະນຸດໃຫ້ຍືນຍາວ. ອີກດ້ານໜຶ່ງ ເນື່ອງຈາກມີຕາໜ່າງສາທາ ລະນະສຸກເຂົ້າເຖິງເກືອບທຸກພື້ນທີ່ ໃນຂອບເຂດທົ່ວປະເທດ ຍັງສາ ມາດເຮັດໃຫ້ອັດຕາການຕາຍຂອງເດັກທີ່ມີອາຍຸຕ່ຳກວ່າ 5 ປີ ມີອັດຕາ ສ່ວນຫຼຸດລົງເຊັ່ນດຽວກັນ ແລະ ມີທ່າອ່ຽງທີ່ຈະຫຼຸດລົງຢ່າງຕໍ່ເນື່ອງ.

ອີກຕົວຊີ້ວັດໜຶ່ງທີ່ສຳຄັນ ຂອງການເຕີບໃຫຍ່ຂະຫຍາຍຕົວ ທາງດ້ານປະລິມານ, ຄຸນນະພາບ ແລະ ປະສິດທິພາບ ຂອງວຽກງານ ສາທາລະນະສຸກ ກໍ່ຄືອັດຕາສ່ວນການເພີ່ມຂຶ້ນຂອງແພດ, ໝໍ, ພະຍາ ບານ, ຊ່ຽວຊານ, ຜູ້ຊ່ວຍພະຍາບານ ແລະ ພະນັກງານງານທີ່ເຮັດວຽກ

ງານສາທາລະນະສຸກ ໃນຂະແໜງຕ່າງໆ ມີປະມານ 11,000 ຄົນ ໃນ ປີ ,2005 ໄດ້ເພີ່ມຂຶ້ນເປັນ 12,770 ຄົນ ໃນປີ 2015 ແລະໃນປີ 2021 ປະກອບມີຜູ້ຊ່ຽວຊານ, ໝໍທົ່ວໄປ, ພະຍາບານ ແລະແພດພະ ດຸງຄັນ ທີ່ເປັນລັດຖະກອນ ລວມທັງໝົດຈຳນວນ 10,811 ຄົນ (ສູນສະຖິຕິແຫ່ງຊາດ, 2021, ໜ້າ 143).

5). ພັດທະນາຄວາມສີວິໄລທາງດ້ານຈິດໃຈ.

ການພັດທະນາຄົນທາງດ້ານຈິດໃຈ ແມ່ນການສ້າງຄວາມ ສວຍງາມໃຫ້ແກ່ຄົນລາວ ເພື່ອສ້າງຄວາມສວຍງາມໃຫ້ແກ່ສັງຄົມ. ຄວາມສວຍງາມໃນທີ່ນີ້ ບໍ່ສະເພາະແຕ່ຄວາມງາມທາງພາຍນອກ ຍັງ ກວມເອົາຄວາມງາມທາງດ້ານຈິດໃຈມະນຸດສະທຳຂອງຄົນ. ຄວາມ ສວຍງາມໃນການດຳລົງຊີວິດຂອງຄົນ ມີຫຼາຍສີສັນແຕກຕ່າງກັນ ຊຶ່ງ ສະແດງອອກໃນການປະພຶດ, ໃນການປາກເວົ້າ, ການພົວພັນໃນ ສັງຄົມ. ພັກເຮົາໄດ້ເນັ້ນວ່າ: ເສີມຂະຫຍາຍຄຸນຄ່າວັດທະນະທຳທີ່ ເປັນເອກະລັກຂອງຊາດ, ພັດທະນາຄວາມສີວິໄລດ້ານຈິດໃຈ ຂອງ ສັງຄົມຢ່າງບໍ່ຢຸດຢັ້ງ (ກົມການເມືອງສູນກາງພັກ, 2021, ໜ້າ 4). ວັດທະນະທຳ ຂອງຊາດລາວ ແມ່ນສິ່ງຍອດຍິ່ງຂອງຄົນລາວ, ແມ່ນ ຄວາມເອກອ້າງທະນົງໃຈ ແລະ ທັງແມ່ນສິ່ງຊຸກຍູ້ປຸກຈິດໃຈຄົນໃນ ຊາດ: "ເສຍວັດທະນະທຳແມ່ນເສຍຊາດ" ຊຶ່ງຄົນລາວຕ້ອງພ້ອມກັນ ຮັກສາວັດທະນະທຳ ແລະ ເພີ່ມພູນຄູນສ້າງຄຸນຄ່າວັດທະນະທຳ ແຫ່ງຊາດ, ຮັບປະກັນໃຫ້ທົ່ວປວງຊົນ ໄດ້ຮັບການພັດທະນາ, ຍົກ ລະດັບທາງດ້ານແນວຄິດວັດທະນະທຳຂຶ້ນຢ່າງບໍ່ຢຸດຢັ້ງເປັນ ຕົ້ນ ແມ່ນພູມປັນຍາ, ຄວາມຮູ້, ການປະດິດຄິດສ້າງຫັດສິນທຳ ແລະ ອື່ນໆ.

ພັດທະນາຄົນມີຄວາມສີວິໄລດ້ານຈິດໃຈ ແມ່ນການສ້າງ ຄົນໃຫ້ມີຄວາມຮູ້ສຶກທີ່ດີ ໃນການເຮັດວຽກ, ຜູ້ອອກແຮງງານມີຈິດ ໃຈເບິ່ງບັນຫາພາວະວິໄສ, ບໍ່ໃນຕົວ, ດຳລົງຊີວິດຢ່າງຫ້າວຫັນ, ອາ ລົມດີ ແລະ ມີຄວາມເປັນເຈົ້າຕົນເອງ, ຜູ້ມີຈິດໃຈດີແມ່ນຜູ້ທີ່ມີແບບ ແຜນການດຳລົງຊີວິດທີ່ສີວິໄລ. ດ້ານສຸຂະພາບສັງຄົມ ແມ່ນສະແດງ ອອກດ້ວຍຄວາມເປັນກັນເອງ ໃນການພົວພັນ ລະຫວ່າງ ບຸກຄົນ ກັບ ລວມໝູ່, ຜູ້ອອກແຮງງານ ຮູ້ຈັກປັບໂຕເຂົ້າກັບສະພາບແວດ ລ້ອມດຳລົງຊີວິດ, ປັບໂຕເຂົ້າກັບເພື່ອນມິດ, ເພື່ອນຮ່ວມງານ, ຄົນຢູ່ ອ້ອມຂ້າງ; ປັບໂຕໄດ້ດີເທົ່າໃດຍິ່ງມີຄົນຮັກແພງຫຼາຍ, ອັນນີ້ສະແດງ ໃຫ້ເຫັນວ່າ ຊັບພະຍາກອນມະນຸດທີ່ມີສຸຂະພາບສັງຄົມດີ.

**2.2. ບັນຫາທີ່ຕັ້ງຂຶ້ນໃນການພັດທະນາຄົນ ຢູ່ ສປປ ລາວ.**

ບົນພື້ນຖານຜົນສຳເລັດການນຳພາພັດທະນາຄົນຂອງພັກ ທີ່ ກ່າວມານັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງຍຸກສະໄໝ ໃໝ່, ຍຸກຂໍ້ມູນຂ່າວສານ, ການພັດທະນາວິທະຍາສາດ, ເຕັກໂນໂລ ຊີນັບມື້ຂະຫຍາຍຕົວ, ພວກເຮົາຍັງປະເຊີນໜ້າກັບສິ່ງທ້າທາຍ ແລະ ຫຍຸ້ງຍາກຫຼາຍຢ່າງ: ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃນປັດຈຸບັນ ໄດ້ສົ່ງຜົນກະທົບໂດຍກົງຕໍ່ແນວຄິດ ຂອງພະ ນັກງານ ແລະ ປະຊາຊົນ ເຮັດໃຫ້ຂາດຄວາມທຸ່ນທ່ຽງໃນການດຳລົງ ຊີວິດ. ພະນັກງານຮຸ່ນໜຸ່ມມີຈຳນວນຫຼາຍ ແຕ່ຍັງບໍ່ໜັກແໜ້ນ, ມັກ ຈະຖືກຍຸແຍ່, ຊັກຈູງໄດ້ງ່າຍ, ຖືກຝ່າຍກົງກັນຂ້າມສວຍໃຊ້, ລະບົບ ການສຶກສາແຕ່ລະຂັ້ນ, ແຕ່ລະຂັ້ນຮຽນ ບໍ່ໄດ້ຮັບຄວາມສົນໃຈ, ປະລິ ມານການເຂົ້າຮ່ວມແຕ່ລະສະຖາບັນຫຼຸດລົງ, ລະດັບທັກສະວິຊາຊີບຍັງ ບໍ່ທັນເລິກເຊິ່ງ, ຊ່ຽວຊານ, ວິຊາການ ຍັງມີໜ້ອຍ. ບັນຫາສຸຂະພາບ ຂອງປະຊາກອນ ຍັງຖືກກະທົບໃນການດຳລົງຊີວິດ, ການເຂົ້າເຖິງການ ບໍລິການໂຮງໝໍ ເພື່ອປິ່ນປົວສຸຂະພາບແມ່ນຫຍຸ້ງຍາກ ແລະ ບໍ່ທົ່ວ ເຖິງ. ການພັດທະນາສີມືແຮງງານຍັງມີຈຳກັດ, ແຮງງານບໍ່ສາມາດຕອບ ສະໜອງກັບຄວາມຕ້ອງການ, ທັກສະສີມືຍັງຈຳກັດ, ບໍ່ສາມາດ ແຂ່ງຂັນກັບຕະຫຼາດແຮງງານໄດ້, ຖ້າສົມທຽບໃສ່ວ່າ ປະເທດເຮົາ ມີແຮງງານໜຸ່ມກວມເຖິງ ,%60ແຕ່ການປະກອບສ່ວນຕົວຈິງ ເຂົ້າ ໃນໂຮງຈັກໂຮງງານຢູ່ ສປປ ລາວ ຍັງມີໜ້ອຍ, ສ່ວນໃຫຍ່ແມ່ນແຮງ ງານທີ່ໄປເຮັດວຽກຢູ່ປະເທດໃກ້ຄຽງ; ວັດທະນະທຳ ຂອງຄົນລາວ ມີ ລັກສະນະເຈືອຈານ, ວັດທະນະທຳທີ່ເປັນເອກະລັກ ຖືກທັນປ່ຽນໄປ ໃນຍຸກແຫ່ງການເຊື່ອມໂຍງ ແລະບັນຫາອື່ນໆ.

**III.ການພັດທະນາຄົນ ເພື່ອຕອບສະໜອງກັບຄວາມ ຕ້ອງການພັດທະນາປະເທດ ຕາມທິດສັງຄົມນິຍົມ ໃນຕໍ່ໜ້າ.**

ການພັດທະນາຄົນ ແມ່ນຄວາມຮຽກຮ້ອງຕ້ອງການຂອງພັກ, ລັດ ແລະ ທົ່ວປວງຊົນລາວທັງຊາດ. ຍ້ອນວ່າ ຄົນເປັນກຳລັງຂັບເຄື່ອນ ສຳຄັນ ໃຫ້ແກ່ການພັດທະນາແຕ່ລະຂະແໜງການ. ຄົນມີບົດບາດຮັກ ສາສະຖຽນລະພາບທາງການເມືອງ ໃນຕະຫຼອດພາລະກິດປົກປັກຮັກ ສາ ແລະ ພັດທະນາປະເທດຊາດ ກໍ່ຄືການກໍ່ສ້າງສັງຄົມໃໝ່ ໄດ້ຢັ້ງຢືນ ຢ່າງໜັກແໜ້ນເຖິງກຳລັງແຮງຂອງຄົນ. ຄົນທັງເປັນຈຸດໝາຍທັງເປັນ ກຳລັງຄົນ ໃນການພັດທະນາປະເທດຊາດ; ຄົນເປັນປັດໄຈຕັດສິນໃຫ້ ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃຫ້ມີການເຕີບໂຕ, ໝັ້ນທ່ຽງ ແລະ ຍືນຍົງ ເຮັດໃຫ້ສັງຄົມມີຄວາມສະຫງົບສຸກ. ດ້ວຍ ເຫດນັ້ນ ເພື່ອພັດທະນາຄົນ ໃຫ້ຕອບສະໜອງກັບຄວາມຕ້ອງການ ແຫ່ງການພັດທະນາຕາມທິດສັງຄົມນິຍົມນັ້ນ ສາມາດຖອດໄດ້ບາງ ບົດຮຽນດັ່ງນີ້:

**ໜຶ່ງ**, ການພັດທະນາຄົນຕາມທິດສັງຄົມນິຍົມ ກ່ອນອື່ນໝົດ ແມ່ນພັດທະນາທາງດ້ານແນວຄິດ-ທິດສະດີ ດ້ວຍການສຶກສາອົບຮົມ ການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ ແລະ ທົ່ວປວງຊົນ ໃຫ້ມີຄວາມເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມ. ກອງປະຊຸມໃຫຍ່ ວຽກງານແນວຄິດທົ່ວປະເທດ ຄັ້ງທີ V ໄດ້ຢືນຢັນວ່າ: "ວຽກງານການ ເມືອງ-ແນວຄິດ ເປັນໜ້າທີ່ສຳຄັນພື້ນຖານ, ເປັນວຽກກົກ, ເປັນວຽກ ທີ່ຕ້ອງເຮັດກ່ອນ, ເຮັດເປັນປະຈຳ ແລະ ສອດຫ້ອຍໄປທຸກຂົງເຂດ ວຽກງານຂອງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງ ສັງຄົມ, ເປັນປັດໄຈຮັບປະກັນທຸກໄຊຊະນະຂອງການປະຕິວັດ" (ກົມ ການເມືອງສູນກາງພັກ, 2020, ໜ້າ 1). ການສຶກສາອົບຮົມໃຫ້ພະ ນັກງານ-ລັດຖະກອນ ແລະ ທົ່ວປວງຊົນ ມີແນວຄິດອຸດົມການສັງ ຄົມນິຍົມ ທັງເປັນການປະຕິບັດຈຸດໝາຍ, ທັງແມ່ນເສັ້ນທາງເດີນໃນ ການປະຕິບັດໜ້າທີ່ການເມືອງຂອງພັກ. ການສຶກສາອົບຮົມການ ເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ ແລະ ທົ່ວປວງຊົນ ໃຫ້

ເຂົ້າໃຈແຈ້ງຕໍ່ກັບອຸດົມການສັງຄົມນິຍົມ ແມ່ນສິ່ງຈຳເປັນ ແລະຂາດ ບໍ່ໄດ້. ການສຶກສາອົບຮົມການເມືອງ-ແນວຄິດດ້ານອຸດົມການ ຕ້ອງ ຮັບປະກັນໄດ້ເນື້ອໃນທີ່ຊັດເຈນ, ເນື້ອໃນທີ່ຈຳເປັນໃນການນຳພາ ສຶກສາອົບຮົມນັ້ນ ແມ່ນລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອອັນດີງາມຂອງພັກ, ຂອງຊາດ ແລະ ສິ່ງທີ່ຄວນ ປະດິດສ້າງນຳໃຊ້ເຂົ້າໃນສະພາບຄວາມຈຳເປັນ ຂອງປະເທດເຮົາ. ໄປຄຽງຄູ່ກັບລະບົບແນວຄິດນີ້ ກໍ່ຕ້ອງໄດ້ສຸມໃສ່ປະກອບຄວາມຮູ້ ກ່ຽວກັບທິດສະດີສັງຄົມນິຍົມ, ລະບອບສັງຄົມນິຍົມ, ເສັ້ນທາງ ກ້າວຂຶ້ນສັງຄົມນິຍົມ ແລະ ວັດທະນະທຳສັງຄົມນິຍົມ. ໃນການ ປະກອບຄວາມຮູ້ນີ້ອາດຈະກຳນົດເປັນເປົ້າໝາຍ ແລະ ປັບປຸງເນື້ອ ໃນໃຫ້ສອດຄ່ອງກັບແຕ່ລະເປົ້າໝາຍດັ່ງກ່າວ, ສຶກສາອົບຮົມຜ່ານ ລະບົບສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນ, ການສຶກ ສາສາມັນແລະ ການສຶກສາຊັ້ນສູງ; ໃນການດຳເນີນການສຶກສາ ອົບຮົມ ຕ້ອງໄດ້ເຮັດຢ່າງຕໍ່ເນື່ອງລຽນຕິດ. ຖ້າຫາກວຽກງານ ການເມືອງ-ແນວຄິດທິດສະດີຂອງພັກ ໄດ້ຮັບການຜັນຂະຫຍາຍ ທົ່ວເຖິງ ຈະສ້າງໄດ້ຄວາມຮັບຮູ້ຄວາມເຂົ້າໃຈ, ຊອນເຊື່ອມະຫາຊົນ ເຂົ້າຮ່ວມໄດ້ຢ່າງພ້ອມພຽງ ຈະເປັນການຍົກສູງບົດບາດການນຳພາ ຂອງພັກ,ປະສິດທິຜົນ ຂອງການບໍລິຫານລັດ ແລະ ສິດເປັນເຈົ້າຂອງ ປະຊາຊົນ ໄດ້ຮັບເສີມຂະຫຍາຍຢ່າງເປັນຮູບປະທຳໃນຕົວຈິງ. ຢາກ ເຮັດໄດ້ຄືແນວນັ້ນຄະນະພັກທຸກຂັ້ນ, ອົງການບໍລິຫານລັດທຸກຂະແ ໜງການ, ອົງການ ຈັດຕັ້ງການເມືອງ-ສັງຄົມ ແລະ ທົ່ວປວງຊົນ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບຕໍ່ຊາຕາກຳ ຂອງປະເທດຊາດ.

ພ້ອມດຽວກັນນີ້ ໃນການສ້າງພະນັກງານ ຕ້ອງໄດ້ຫັນເປັນ ໜ່ວມຕາມພັກໄດ້ຊີ້ນຳ, ການຫັນເປັນໜ່ວມ ແມ່ນຮັບປະກັນຄວາມ ໜັກແໜ້ນດ້ານຄຸນທາດການເມືອງ, ຄຸນສົມບັດ, ຄວາມສາມາດ, ແບບແຜນວິທີນຳພາ ແລະ ໄດ້ຮັບການເຊື່ອໝັ້ນຈາກມະຫາຊົນ; ບຸກທະລຸໃຫ້ໄດ້ທາງດ້ານແນວຄິດ ສ້າງໃຫ້ໄດ້ຄວາມເຊື່ອໝັ້ນຕໍ່ພັກ, ບຸກທະລຸໃນການຝຶກຝົນຫຼໍ່ຫຼອມຮໍ່າຮຽນ ພັດທະນາພະນັກງານໜ່ວມ ໃຫ້ກ້າວໜ້າ, ສ້າງການຫັນປ່ຽນໃນວຽກງານການຈັດຕັ້ງ ແລະ ການ ສ້າງວິຊາຊີບວຽກເຮັດງານທຳຂອງຊາວໜຸ່ມ ແນໃສ່ແກ້ໄຂບັນຫາໄພ ວ່າງງານ ເພື່ອສ້າງຄວາມຢູ່ດີກິນດີໃຫ້ພະນັກງານໜຸ່ມ, ໃຫ້ປະຊາຊົນ ທົ່ວປະເທດ. ໄປພ້ອມກັນນີ້ ກໍ່ຕ້ອງໄດ້ອອກແຮງຕ້ານຍຸດທະສາດ ຫັນປ່ຽນໂດຍສັນຕິ ຂອງສັດຕູ ທີ່ບຸກໂຈມຕີເຂົ້າໃນຖັນແຖວຊາວ ໜຸ່ມ, ຕ້ອງໄດ້ອອກແຮງໃນການສ້າງຄວາມຮັບຮູ້, ສຶກສາອົບຮົມ ການເມືອງ-ແນວຄິດ, ສ້າງໃຫ້ໄດ້ຈິດໃຈປະຕິວັດທີ່ສູງສົ່ງ ເພື່ອປະ ກອບສ່ວນເຂົ້າໃນການບູລະນະລະບອບປະຊາທິປະໄຕ ຕາມທິດສັງ ຄົມນິຍົມ ໃຫ້ມີຜົນສຳເລັດ.

**ສອງ**, ຍົກລະດັບການສຶກສາ, ພົມປັນຍາ, ຄວາມຮູ້ໃຫ້ມີ ຄຸນນະພາບ. ຕໍ່ກັບບັນຫານີ້ ພັກປະຊາຊົນປະຕິວັດລາວ ໄດ້ໃຫ້ ທັດສະນະ:"ປັບປຸງຫຼັກສູດການຮຽນ-ການສອນ ທີ່ສົ່ງເສີມໃຫ້ ນັກຮຽນມີທັກສະໃນການແກ້ໄຂບັນຫາ, ຮັບປະກັນການຫັນປ່ຽນ ຈິນຕະນາການ ຂອງຊັບພະຍາກອນມະນຸດ ໂດຍສະເພາະສະຕິຕໍ່ ການຈັດຕັ້ງປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ, ຄວາມດຸໝັ່ນ, ອົດທົນ, ມີລະບຽບວິໄນສູງ,ການຄົ້ນຄວ້າຮໍ່າຮຽນ ແລະອື່ນໆ ເພື່ອ ປະກອບສ່ວນຕາມຄວາມຮຽກ ຮ້ອງຕ້ອງການ ຂອງການພັດທະນາ ເສດຖະກິດ-ສັງຄົມຢ່າງເຕັມສ່ວນ" (ວາລະສານ ອາລຸນໃໝ່, 2021, ໜ້າ 138) ໃນການຍົກລະດັບການສຶກສານັ້ນ ກໍ່ຕ້ອງໄດ້ມີການປັບປຸງ ຫຼັກສູດໃຫ້ສອດຄ່ອງ ໃນແຕ່ລະໄລ ຍະ; ການປັບປຸງຄວນໄດ້ດຳເນີນ ເປັນລະບົບ, ໃຫ້ສອດຄ່ອງກັບເງື່ອນ ໄຂໃໝ່, ຄວາມຮຽກຮ້ອງ ຕ້ອງການໃໝ່. ຍົກສູງຄຸນນະພາບຂອງການສຶກສາ ເລີ່ມແຕ່ລະດັບ ມັດທະຍົມຂຶ້ນໄປ, ນັກຮຽນຄວນໄດ້ມີການແຍກສາຍຮຽນໃຫ້ ຖືກຕ້ອງຕັ້ງແຕ່ຫົວທີ ໃນເວລາຮຽນມັດທະຍົມປາຍ ເພື່ອກຽມພ້ອມ ໃນການເຂົ້າຮຽນໃນລະດັບທີ່ສູງກວ່າ ແນໃສ່ສ້າງຄວາມຮັບຮູ້, ຄວາມ ຊຳນານງານ, ທັກສະວິຊາຊີບໃຫ້ຕໍ່ເນື່ອງ, ຍົກລະ ດັບການສຶກສາ ສອນໃຫ້ຄົ້ນຄິດຫຼາຍກວ່າແບບທ່ອງຈຳ. ຍົກສູງຄຸນນະພາບສະຖາບັນ ການສຶກສາ ທັງພາກລັດ ແລະ ເອກະຊົນ ໃນການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ສ້າງໃຫ້ໄດ້ຊ່ຽວຊານທີ່ຊຳນານງານ, ຊ່ຽວຊານສະເພາະດ້ານໃຫ້ຊັບພະຍາກອນມະນຸດ ເພື່ອກຽມພ້ອມຮັບ ໃຊ້ສັງຄົມ ແລະ ປະເທດຊາດ. ໃນການພັດທະນາດ້ານການສຶກສາ ກໍ່ ຕ້ອງໄປຄວບຄູ່ກັບຄຸນສົມບັດ, ສ້າງໃຫ້ຄົນມີຄຸນຄ່າໂດຍປະຕິບັດຕາມ ທິດຊີ້ນຳ ຂອງສະຫາຍເລຂາທິການໃຫຍ່ ໃນການພັດທະນາຄົນໃຫ້ "ມີຄວາມຮູ້-ຄວາມສາມາດ ແລະ ພຽບພ້ອມຄຸນ ສົມບັດສົມທຳປະຕິ ວັດ ,ເປັນຜູ້ທີ່ມີຄຸນນະທຳມີມະນຸດສະທຳ, ຍຸຕິທຳ,ອະລິຍະທຳ ແລະ ສຸດຈະລຶດທຳ" (ສີສຸລິດ, ທ., 2022, ໜ້າ 149). ໃນການພັດທະນາ ການສຶກສານັ້ນ ຕ້ອງຈັດຕັ້ງປະຕິບັດຕາມ 5 ຫຼັກມູນການສຶກສາຄື: ປັນຍາສຶກສາ, ຄຸນສົມບັດສຶກສາ, ແຮງງານສຶກສາ,ກາຍຍະສຶກສາ ແລະ ສິລະປະສຶກສາ ໃຫ້ເຂົ້າສູ່ລວງເລິກ.

**ສາມ**, ສົ່ງເສີມສຸກຂະພາບຮ່າງກາຍໃຫ້ແກ່ຄົນ. ນີ້ແມ່ນເປົ້າ ໝ າຍສຳຄັນ ໃນການພັດທະນາຄົນລາວ. ພັກປະຊາຊົນປະຕິວັດລາວ ໄດ້ ຊີ້ນຳວ່າ: "ສ້າງ ແລະ ປະຕິບັດຍຸດທະສາດພັດທະນາຄົນ ໃນດ້ານສຸ ຂະ ພາບຮ່າງກາຍຢ່າງຕໍ່ເນື່ອງ ໂດຍການສ້າງລະບົບການບໍລິການສຸຂະ ພາບ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບ" (ວາລະສານອາລຸນໃໝ່, 2021, ໜ້າ 69). ບົນພື້ນຖານຄວາມຮຽກຮ້ອງຕ້ອງການດັ່ງກ່າວນັ້ນ ໃນການ ພັດທະນາດ້ານສຸຂະພາບ ຕ້ອງໄດ້ມີການສຸມໃສ່ຍົກລະດັບໂຮງໝໍ, ຍົກ ລະດັບການກວດ, ການປິ່ນປົວສຸຂະພາບທີ່ມີຄຸນນະພາບສູງ, ເພີ່ມທະ ວີດ້ານສຸຂະສຶກສາ ທີ່ພົວພັນເຖິງການຮັກສາສຸຂະພາບ, ການປ້ອງກັນ ພະຍາດ ແລະ ສະໜອງຄວາມຮູ້ໂພສະນາການໃຫ້ກວ້າງຂວາງ, ເລິກ ເຊິ່ງ ເພື່ອໃຫ້ປະຊາຊົນຕື່ນຕົວເປັນເຈົ້າການໃນການກັນພະຍາດ, ຮັກ ສາສຸຂະພາບຂອງຕົນເອງ, ຂອງຄອບຄົວ ແລະ ຊຸມຊົນ. ພ້ອມດຽວກັນ ນີ້ ກໍ່ຕ້ອງໄດ້ພັດທະນາຄວາມສີວິໄລດ້ານຈິດໃຈ ຂອງຊັບພະຍາ ກອນ ມະນຸດ, ດ້ວຍການແກ້ໄຂຄວາມທຸກຍາກ ຂອງປະຊາຊົນຢ່າງເປັນ ລະບົບ ແລະ ຮັບປະກັນຄວາມຍືນຍົງ; ຍົກລະດັບການປະຕິບັດສິດ, ພັນທະ ແລະ ຄວາມເປັນເຈົ້າອັນແທ້ຈິງ ຂອງປະຊາຊົນ ຮັບປະ ກັນ ການບັງຄັບໃຊ້ກົດໝາຍ ຖືກຕ້ອງ ແລະ ເປັນທຳ; ສົ່ງເສີມການ

ຂະຫຍາຍກິດຈະກຳຕ່າງໆ ທາງສັງຄົມແບບສ້າງສັນ; ຮັບປະກັນ ຄວາມປອດໄພໃນການດຳລົງຊີວິດ ແລະ ການທຳມາຫາກິນ ຂອງ ປະຊາຊົນ; ສຸມໃສ່ພັດທະນາວັດທະນະທຳຂອງຄົນລາວ ທີ່ເປັນ ເອກະ ລັກ ໄປຄວບຄູ່ກັບການພັດທະນາເສດຖະກິດ-ສັງຄົມ ຂອງ ຊາດ; ປັບ ປຸງຂະບວນການສ້າງຄອບຄົວຢູ່ດີກິນດີ, ສ້າງບ້ານ ວັດທະນະທຳໃໝ່ຕິດພັນກັບການດຳລົງຊີວິດແບບໃໝ່, ພັດທະນາ ອາລົຍະທຳດ້ານຈິດໃຈ; ເອົາໃຈໃສ່ອະນຸລັກຮັກສາ ແລະ ການ ພັດທະນາວັດທະນະ ທຳບັນດາເຜົ່າ ດ້ວຍນະໂຍບາຍທີ່ຈະແຈ້ງ ແລະ ມີແຜນການປະຕິບັດທີ່ເປັນຮູບປະທຳ. ຢາກເຮັດໄດ້ແນວນັ້ນ ກໍ່ຕ້ອງ ໄດ້ເຊື່ອມຊຶມຕາມທັດສະນະຂອງພັກ ທີ່ວ່າ: "ຖືວັດທະນະທຳເປັນ ເປັນປັດໄຈແຫ່ງການດຳລົງຄົງຕົວຂອງຊາດ, ເປັນກຳລັງຊຸກດັນໃຫ້ ສັງຄົມຂະຫຍາຍຕົວ,ທັງແມ່ນຈຸດໝາຍຂອງການພັດທະນາສັງຄົມ ແລະ ພັດທະນາຄົນ" (ກົມການເມືອງສູນກາງພັກ, 2021, ໜ້າ 4).

**ສີ່**, ພັດທະນາຄົນດ້ານວັດຖຸ ແລະ ຈິດໃຈໃຫ້ກົມກຽວກັນ. ການພັດທະນາດ້ານຈິດໃຈ ບໍ່ປະໃຜໄວ້ຂ້າງຫຼັງນັ້ນ ແມ່ນແນວຄິດ ພື້ນເດັ່ນໃນການພັດທະນາຄົນໃນໂລກ. ພັກປະຊາຊົນປະຕິວັດລາວ ໄດ້ເນັ້ນໜັກໃນການພັດທະນາຄົນ ຕາມທິດ "ແມ່ນຄົນທີ່ມີອຸດົມ ຄະຕິກອມມູນິດອັນເລີກເຊິ່ງ, ມີຄວາມຮັກຊາດ, ຮັກສັງຄົມນິຍົມ ຢ່າງດູດດື່ມ, ຮັບໃຊ້ປະເທດຊາດ, ເຊື່ອໝັ້ນພັກ, ເຊື່ອໝັ້ນປະຊາຊົນ ຜູ້ປະຕິວັດ ແລະ ເດັດດ່ຽວເດີນຕາມພັກ, ຮັບໃຊ້ປະຊາຊົນ, ປະກອບ ສ່ວນເຂົ້າໃນການຂຽນປະຫວັດສາດໜ້າໃໝ່ ຂອງຊາດເຮົາ ທີ່ສອດ ຄ່ອງກັບຈຸດໝາຍ ຂອງຍຸກສະໄໝ" (ພົມວິຫານ, ກ., 2024, ໜ້າ 20). ສ້າງຄົນໃໝ່ສັງຄົມນິຍົມ ແມ່ນສ້າງໃຫ້ຄົນມີ ຈິດໃຈດີງາມ, ມີຄຸນທາດການເມືອງ, ຄຸນສົມບັດສິນທຳ, ມີສະຕິໃນ ການເຄົາລົບຊຶ່ງກັນແລະກັນ, ຮູ້ໃຫ້ກຽດກັນ ແລະ ມີຄວາມ ຮັບຜິດຊອບຢ່າງຮອບ ດ້ານ. ຄວາມສອຍງາມທາງດ້ານຈິດໃຈ ຕ້ອງ ສະແດງອອກແຈ້ງໃນການປະພຶດ, ການພົວພັນສັງຄົມ.

**ຫ້າ**, ພັດທະນາຄົນດ້ານດີຈີຕອນ. ເສດຖະກິດດີຈີຕອນຈະ ໂດດເດັ່ນ ກໍ່ຕໍ່ເມື່ອລະດັບຄວາມຮູ້ດີຈີຕອນ ຂອງປະຊາຊົນດີຂຶ້ນ ຊຶ່ງ ປັດຈຸບັນ ລະດັບຄວາມຮູ້ຂອງປະຊາຊົນໃນແຕ່ລະປະເທດ ບໍ່ພຽງ ແຕ່ສາມາດອ່ານ ແລະ ຂຽນໜັງສືເທົ່ານັ້ນ ແຕ່ຍັງກວມເອົາຄວາມຮູ້ ທາງດ້ານດີຈີຕອນ, ຄວາມສາມາດນຳໃຊ້ເຕັກໂນໂລຊີ, ເຂົ້າໃຈເນື້ອ ໃນດີຈີຕອນ, ເຂົ້າເຖິງການນຳໃຊ້ເຕັກໂນໂລຊີດີຈີຕອນຢ່າງມີຄຸນ ນະພາບ,ປະດິດສ້າງ, ຄົ້ນຄວ້າ ແລະ ສື່ສານດ້ວຍເຄື່ອງມືທີ່ເໝາະ ສົມ. ຖ້າຫາກເຕັກໂນໂລຊີ ມີຄວາມສຳຄັນໃນການຂະຫຍາຍຕົວ ຂອງສັງຄົມແລ້ວ, ຄວາມຮູ້ທາງດ້ານເຕັກໂນໂລຊີ ກໍ່ ຈະເປັນ ພາຫະນະໃນການຮຽນຮູ້ຕະຫຼອດຊີວິດ ຂອງມະນຸດເຮົາ. ດ້ວຍເຫດ ນັ້ນ ໃນການພັດທະນາຄົນໃໝ່ໃນຍຸກດີຈີຕອນ ຄວນສຸມໃສ່ສິ່ງເສີມ ການຮຽນຮູ້ ແລະ ທັກສະເຕັກໂນໂລຊີດີຈີຕອນ ເຂົ້າໃນລະບົບການ ສຶກສາແຫ່ງຊາດທຸກລະ ດັບ, ມີນະໂຍບາຍການລົງທຶນເຂົ້າໃສ່ການ ຈັດຊື້ ແລະ ຕິດຕັ້ງເຕັກໂນໂລຊີດີຈີຕອນ ໃນຂະແໜງການສຳຄັນ ເປັນຕົ້ນແມ່ນອິນເຕີເນັດສຳ ລັບການສຶກສາ, ອຸປະກອນໄອທີສຳລັບ ການສຶກສາ, ປັບປຸງຫຼັກສູດແລະ ຮູບແບບການຮຽນ-ການສອນອອນ ລາຍ; ສະໜັບສະໜູນການຝຶກອົບຮົມ ແລະ ປະກອບຄວາມຮູ້, ຝຶກ ຄວາມສາມາດໃຫ້ພະນັກງານ-ລັດຖະກອນ ໃນການນຳໃຊ້ເຕັກໂນໂຊ ຊີດີຈີຕອນ ເພື່ອຍົກລະດັບໃນການຄຸ້ມຄອງບໍລິຫານລັດ; ຫຼຸດຜ່ອນ ຄວາມແຕກໂຕນໃນການເຂົ້າເຖິງການສຶກສາແບບອອນລາຍ, ການເຂົ້າ ເຖິງເຕັກໂນໂລຊີດີຈີຕອນ ສຳ ລັບການສຶກສາ ລະຫວ່າງ ເມືອງໃຫຍ່ ແລະ ເຂດພູດອຍ, ເຂດຫ່າງໄກສອກຫຼີກ ຕິດພັນກັບວຽກງານສາມ ສ້າງ; ສ້າງບຸກຄະລາກອນທາງດ້ານດີຈີຕອນ ໃຫ້ພຽງພໍກັບຄວາມ ຕ້ອງການ ຂອງຕະຫຼາດແຮງງານ ພາຍໃນປະເທດ ທັງເປັນທີ່ຍອມຮັບ ໃນລະດັບພາກພື້ນ ແລະ ສາກົນ. ສ້າງແລະ ປັບປຸງນະໂຍບາຍ, ກົນໄກ ເພື່ອດຶງດູດຊ່ຽວຊານ ແລະ ວິຊາການທີ່ມີຄວາມຮູ້, ຄວາມສາມາດ, ພອນສະຫວັນ, ຄວາມຊຳນານຈາກຕ່າງປະເທດ ເຂົ້າມາເຮັດວຽກ, ດຳເນີນທຸລະກິດ, ຖ່າຍທອດຄວາມຮູ້ແລະ ປະສົບການທາງດ້ານເຕັກ ໂນໂລຊີດີຈີຕອນ ແລະ ນະວັດຕະກຳທີ່ທັນສະໄໝ ເພື່ອພັດທະນາ ສປປ ລາວ; ສ້າງ ແລະ ພັດທະນາຊັບພະ ຍາກອນມະນຸດ ທາງດ້ານ ເຕັກນິກຄວາມປອດໄພ ໃນແຕ່ລະໄລຍະ; ຊຸກຍູ້ໃຫ້ໄວໜຸ່ມນຳໃຊ້ ເຕັກໂນໂລຊີດີຈີຕອນ ເຂົ້າໃນການພັດທະນາຕົນເອງ, ຄອບຄົວ ແລະ ການຈັດຕັ້ງ. ສົ່ງເສີມໃຫ້ເຂົາເຈົ້າມີແນວຄິດລິເລີ່ມສ້າງທຸລະກິດ ໂດຍ ນຳໃຊ້ເຕັກໂນໂລຊີດີຈີຕອນ.

ສັງລວມແລ້ວ, ການພັດທະນາຄົນ ເພື່ອຕອບສະໜອງກັບ ຄວາມຕ້ອງການ ແຫ່ງການພັດທະນາປະເທດ ຕາມທິດສັງຄົມນິຍົມ ແມ່ນຄວາມຮຽກຮ້ອງຕ້ອງການຂອງພັກ ແມ່ນຄວາມຈຳເປັນໃນການ ປະຕິບັດໜ້າທີ່ການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ ໃຫ້ ສົມບູນຍິ່ງຂຶ້ນ. ການພັດທະນາຄົນໃໝ່ສັງຄົມນິຍົມ ຢູ່ ສປປ ລາວ ແມ່ນສ້າງຄົນໃຫ້ມີຄວາມໜັກແໜ້ນດ້ານແນວຄິດ, ອຸດົມການສັງຄົມ ນິຍົມ; ສ້າງຄົນໃຫ້ມີລະດັບການສຶກສາ, ທັກສະອາຊີບ, ມີຄຸນນະພາບ ໄດ້ມາດຕະຖານຕາມຄວາມຕ້ອງການ ໃນການພັດທະນາຂອງປະເທດ ຊາດ; ການທີ່ມີສຸຂະພາບແຂງແຮງ ແມ່ນຄວາມມຸ່ງມາດປາຖະໜາອັນ ແຮງກ້າ ຂອງທົ່ວປວງຊົນ; ການຮັກສາໄດ້ວັດທະນະທຳຂອງປະຊາຊົນ ບັນດາເຜົ່າ ແມ່ນເປັນການເສີມສ້າງຄຸນຄ່າທີ່ເປັນເອກະລັກ ໃຫ້ແກ່ ຊາດຕົນ. ບັນດາປັດໄຈຕ່າງໆ ຖ້າໄດ້ຮັບການຈັດຕັ້ງປະຕິບັດຢ່າງແທດ ເຖິງ, ຮັບປະກັນໄດ້ຄຸນນະພາບ ແມ່ນຈະສາມາດສ້າງຄົນ ເພື່ອມາຮັບ ໃຊ້ພາລະກິດປະຕິວັດອັນມີກຽດຂອງພັກເຮົາ ຢ່າງມີຜົນສຳເລັດ ແລະ ຍືນຍົງ.

## ເອກະສານອ້າງອີງ


ກະຊວງສາທາລະນະສຸກ. (2022, ວັນທີ 26 ຕຸລາ). *ບັນດາກົມ ກອງ ແລະ ອົງການຈັດຕັ້ງ ທີ່ຂຶ້ນກັບກະຊວງສາທາ ລະນະ*

*ສຸກ*, ຄົ້ນຫາຈາກ : https://moh.gov.la/ index.php/salanahoo/2020# .

ກະຊວງສຶກສາທິການ ແລະ ກິລາ. (2021). *ແຜນຍຸດທະສາດ ພັດທະນາຊັບພະຍາກອນມະນຸດຮອດປີ 2025*.

ກະຊວງສຶກສາທິການ ແລະ ກິລາ. (2021). *ຍຸດທະສາດພັດ ທະນາຊັບພະຍາກອນມະນຸດແຫ່ງຊາດ ໄລຍະ 2023-2021*.

ກະຊວງສຶກສາທິການ ແລະ ກິລາ. (2023). *ບົດປະເມີນກາງສະໄໝ ການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໄລຍະ 2023-2021 ແລະ ແຜນປະຕິ ບັດງານ ໄລຍະ 2025-2023*.

ກະຊວງພາຍໃນ (2020). *ບົດລາຍງານການຍ້ອງຍໍຜົນງານ 5 ປີ ຂະບວນການແຂ່ງຂັນຮັກຊາດ, ສ້າງບ້ານພັດທະນາ ແລະ ຜັນຂະຫຍາຍວຽກງານ 3 ສ້າງ ເຂົ້າສູ່ລວງເລິກທົ່ວປະເທດ*.

ກະຊວງພາຍໃນ. (2023). *ສະຕິຖິພະນັກງານ-ລັດຖະກອນ*.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. (2022, ວັນທີ 13 ພະຈິກ). *ສະຖິຕິວຽກງານແຮງງານ ແລະ ສະຫວັດດີການ ສັງຄົມ*, ຄົ້ນຫາຈາກ: https://www.molsw.gov.la/ ministry?a= .

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. (2022, ວັນທີ 18 ຕຸລາ). *ບັນດາກົມໃນກະຊວງ ແລະ ບັນດາໜ່ວຍງານ ທີ່ຂຶ້ນ ກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ*, ມາຈາກ: https://www.molsw.gov.la/ ministry.

ກົມການເມືອງສູນກາງພັກ. (2021). *ມະຕິ ວ່າດ້ວຍເພີ່ມທະວີການ ນຳພາຂອງພັກ ຕໍ່ວຽກງານວັດທະນະທຳ ໃນໄລຍະໃໝ່* (ສະບັບເລກທີ /25ກມສພ, ລົງວັນທີ 17 ພຶດສະພາ 2021).

ກົມການເມືອງສູນກາງພັກ. (2020). *ມະຕິ ວ່າດ້ວຍການຍົກສູງຄຸນ ນະພາບວຽກງານການເມືອງ - ແນວຄິດ ໃນໄລຍະໃໝ່* (ສະບັບເລກທີ /206ກມສພ, ລົງວັນທີ 7 ທັນວາ 2020).

ຄະນະບໍລິຫານງານສູນກາງພັກ. (2021). *ມະຕິ ວ່າດ້ວຍການເພີ່ມ ທະວີການນຳພາຂອງພັກ ເພື່ອສ້າງການຫັນປ່ຽນຢ່າງແຂງ ແຮງ ແລະ ເລິກເຊິ່ງ ວຽກງານພະນັກງານ* (ສະບັບເລກທີ /04ຄບສພ, ລົງວັນທີ 30 ກັນຍາ 2021).

ສີສຸລິດ, ທ. (2022). *ບົດປາໄສໃນພິທີສະເຫຼີມສະຫຼອງວັນສ້າງຕັ້ງ ມະຫາວິທະຍາໄລແຫ່ງຊາດ ຄົບຮອບ 25 ປີ*, ໂຮງພິມແຫ່ງ ລັດ.

ສູນສະຖິຕິແຫ່ງຊາດ, (2005). *ຂໍ້ມູນແຮງງານ*.

ສູນສະຖິຕິແຫ່ງຊາດ. (2015). *ຂໍ້ມູນແຮງງານ ແລະ ສະຫວັດດີການ ສັງຄົມ*.

ສູນສະຖິຕິແຫ່ງຊາດ, (2021*). ສະຖິຕິແຮງງານ ແລະ ສະຫວັດດີ ການສັງຄົມ*.

ສູນສະຕິຕິແຫ່ງຊາດ. (2021). *ສະຖິຕິກ່ຽວກັບວຽກງານການສຶກສາ ປີ .2021-1985*

ສູນສະຖິຕິແຫ່ງຊາດ. (2022). *ສະຖິຕິກ່ຽວກັບວຽກງານສາທາລະນະ ສຸກ*.

ພິມວິຫານ, ກ. (1986). ກອງປະຊຸມສູນກາງພັກ ຄັ້ງທີ IV, *ບົດ ລາຍງານການເມືອງ*. ສຳນັກພິມຈຳໜ່າຍ ສປປ ລາວ.

ພິມວິຫານ, ກ. (2024). ນິພົນເລືອກເຟັ້ນ, ເຫຼັ້ມ IV, *ກ່ຽວກັບ ການສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕ*.

ອາລະສານ ອາລຸນໃໝ່. (2011). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ IX ພັກປະຊາຊົນປະຕິວັດລາວ*.

ອາລະສານ ອາລຸນໃໝ່. (2016). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ*.

ອາລະສານ ອາລຸນໃໝ່. (2021). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ*.

ອາລະສານ ອາລຸນໃໝ່. (2021). ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ, *ບົດລາຍງານແຜນພັດທະນາ ເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX 2025-2021 ແລະ ແຜນງົບປະມານແຫ່ງລັດ 5 ປີ .2025-2021*

World Bank. (2022, ວັນທີ 9 ພະຈິກ). *Government expenditure on education, total of GDP)-Lao PDR*, ມາຈາກ:https://data.worldbank.org/ indicator/ SE.XPD.TOTL. GD.ZS?locations=LA.

World Bank. (2022, ວັນທີ 16 ພະຈິກ). *Life expectancy at birth between 1960-2020*, ມາຈາກ: https:// data.world bank.org/indicator/SP.DYN.LE00.IN? end=2020 &locations=LA&start= 1960&view=chart